ມາດຕະຖານແຫ່ງຊາດ ສຳລັບການແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

# ບົດທີ 6

# ການສຳຫຼວດ

ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊກລ) ກ່ຽວກັບ
ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

15 ຕຸລາ 2012

# ສາລະບານ

ສາລະບານ ....................................................................................................2
ບັນທຶກການດັດແກ້ ....................................................................................................4
ການສຳຫຼວດ....................................................................................................5
1. ບົດນຳ ....................................................................................................5
2. ຂອບເຂດ ....................................................................................................5
3. ຄວາມຮັບຜິດຊອບລວມໃນການເກັບກຳຂໍ້ມູນ ....................................................................................................5
4. ຄວາມຮັບຜິດຊອບຂອງຫ້ອງການ ຄຊກລ ປະຈຳແຂວງ ໃນການເກັບກຳຂໍ້ມູນຂ່າວສານ ......................6
4.1. ການປະຕິບັດຕໍ່ຂໍ້ມູນທີ່ໄດ້ຮັບ....................................................................................................7
5. ມາດຕະຖານການສຳຫຼວດ ....................................................................................................8
6. ລະຫັດເລກໝາຍປະຈຳໜ້າວຽກ ....................................................................................................9
7. ເຄື່ອງໝາຍການສຳຫຼວດ....................................................................................................9
8. ການສຳຫຼວດແລະການອະນຸຍາດໃຫ້ເກັບກູ້ ....................................................................................................10
8.1. ການຂໍອະນຸຍາດການສຳຫຼວດແລະເກັບກູ້ເນື້ອທີ່....................................................................................................10
8.1.1. ການເກັບກູ້ເນື້ອທີ່ດິນທີ່ກວ້າງໃຫຍ....................................................................................................11
9. ການປະຕິບັດງານການສຳຫຼວດສະເພາະ....................................................................................................12
9.1. ການສຳຫຼວດທົ່ວໄປ ....................................................................................................12
9.2. ການສຳຫຼວດດ້ານວິຊາການ ....................................................................................................13
9.2.1. ການສຳຫຼວດ້ານວິຊາການສະເພາະສຳລັບຫຼັກຖານຂອງ ລບຕ....................................................................................................14
10. ການເກັບກູ້ເນື້ອທີ່ແລະການຄຸ້ມຄອງດ້ານຄວາມສ່ຽງທີ່ຮ້າຍແຮງ....................................................................................................15
10.1. ເງື່ອນໄຂໃນການນຳໃຊ້ການຄຸ້ມຄອງຄວາມສ່ຽງອັນຕະລາຍສຳລັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ນັ້ນ15
10.2. ການທົບທວນຄືນຂອງ ຄຊກລ....................................................................................................16
10.3. ຄວາມຮັບຜິດຊອບຕໍ່ເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ....................................................................................................16
10.4. ມາດຖານລະບຽບການປະຕິບັດງານ (SOP) ....................................................................................................16
11. ການສຳຫຼວດບ່ອນທີ່ ລບຕ ....................................................................................................16
12. ການລາຍງານການສຳຫຼວດ ....................................................................................................17
12.1. ເນື້ອທີ່ດິນທີ່ໄດ້ສຳຫຼວດແລ້ວ ແຕ່ບໍ່ໄດ້ເອົາເຂົ້າໃນແຜນວຽກ ....................................................................................................17

13. ການທຳລາຍລະເບີດ......17

14. ການສຳຫຼວດຜົນສຳເລັດການເກັບກູ້......18

14.1. ໜ້າວຽກເກັບກູ້ທີ່ໃຊ້ເວລາປະຕິບັດດົນ......19

14.2. ການເກັບກູ້ເພື່ອຈຸດປະສົງຂຸດຄົ້ນບໍ່ແຮ່......19

# ບັນທຶກການດັດແກ້

## ການຄຸ້ມຄອງການດັດແກ້ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດແຫ່ງ ສປປ ລາວ

ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຈະມີການທົບທວນຄືນເປັນທາງການ 3 ປີຕໍ່ຄັ້ງ. ຖ້າຫາກມີຄວາມຈຳເປັນກໍ່ສາມາດທົບທວນກ່ອນກຳນົດໄດ້ ເປັນຕົ້ນແມ່ນບັນຫາກ່ຽວກັບຄວາມປອດໄພ ແລະ ປະສິດທິພາບຂອງການປະຕິບັດງານ ຫຼື ສຳລັບຈຸດປະສົງເພື່ອດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ. ຖ້າມີການດັດແກ້ແມ່ນໃຫ້ໃສ່ເລກທີ, ວັນທີ ແລະ ລາຍລະອຽດຂອງການດັດແກ້ໃສ່ໃນຕາຕະລາງທີ່ກຳນົດຢູ່ລຸ່ມນີ້.

ເມື່ອສຳເລັດການທົບທວນມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຢ່າງເປັນທາງການແລ້ວ ກໍ່ຈະໄດ້ເຜີຍແຜ່ໃຫ້ນຳໃຊ້. ຂໍ້ດັດແກ້ຕ່າງໆທີ່ມີຢູ່ໃນສະບັບດັດແກ້ກ່ອນໜ້ານັ້ນ ຈະຕ້ອງໄດ້ລວມເຂົ້າໄວ້ໃນສະບັບດັດແກ້ໃໝ່ເລີຍ ແລະ ໃຫ້ລຶບອອກຈາກຕາຕະລາງບັນທຶກການດັດແກ້. ຈາກນັ້ນ ກໍໃຫ້ເລີ່ມຕັ້ງຕົ້ນບັນທຶກການດັດແກ້ໃໝ່ຈົນກວ່າຈະມີການທົບທວນຄືນໃນຄັ້ງຕໍ່ໄປອີກ.

| ເລກທີ | ວັນທີ | ລາຍລະອຽດການດັດແກ້ |
|---|---|---|
| | | ຂໍ້ 4.<br>ຂໍ້ 9.2, ຂໍ້ 9.2.1<br>ຂໍ້10 ແລະ 10.1<br>ຂໍ້ 10.3<br>ຂໍ້ 12 ແລະ 12.1<br>ຂໍ້ 14-ຄ, ງ ຍ້າຍ ແລະ ຈ ຍ້າຍອອກໜ້ອຍໜຶ່ງ |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |

## ການສຳຫຼວດ

## 1. ບົດນຳ

ການສຳຫຼວດຢູ່ໃນສປປລາວແບ່ງອອກເປັນສອງຮູບແບບຄື:ການສຳຫຼວດບ່ອນທີ່ມີລະເບີດບໍ່ທັນແຕກອາດຈະເປັນຜົນກະທົບຕໍ່ການນຳໃຊ້ເນື້ອທີ່ດິນຫຼືເປັນຄວາມສ່ຽງຕໍ່ຊຸມຊົນທີ່ຄາດບໍ່ເຖິງ,ແລະການສຳຫຼວດພື້ນທີ່ໆຮູ້ແລ້ວຫຼືສົງໃສວ່າມີລະເບີດຕົກຄ້າງຢູ່. ສອງຮູບແບບການສຳຫຼວດແມ່ນມີຄວາມແຕກຕ່າງກັນຢ່າງສິ້ນເຊີງ.

ໂດຍແມ່ນໜ່ວຍງານສຳຫຼວດຈະເປັນຜູ້ລວບລວມເກັບກຳຂໍ້ມູນທີ່ພົວພັນກັບການສຳຫຼວດບ່ອນທີ່ມີລະເບີດບໍ່ທັນແຕກເພື່ອທີ່ຈະອະນຸຍາດໃຫ້ເກັບກູ້ຫຼືໃຫ້ການສຳຫຼວດລູກລະເບີດບໍ່ທັນແຕກແບບພາງໆນັ້ນ.

ການສຳຫຼວດພື້ນທີ່ໆຮູ້ແລ້ວຫຼືສົງໃສວ່າມີລະເບີດຕົກຄ້າງແມ່ນກ່ຽວຂ້ອງກັບຂັ້ນຕອນອະນຸຍາດໃຫ້ນຳເນື້ອທີ່ດິນຫຼືພື້ນທີ່ທີ່ກຳນົດໄວ້ເພື່ອໃຫ້ເກັບກູ້. ຮູບແບບການສຳຫຼວດນີ້ແມ່ນລວມທັງການສຳຫຼວດຄວາມຄືບໜ້າຂອງການສຳຫຼວດດ້ານວິຊາການໂດຍທົ່ວໄປແລະການຄຸ້ມຄອງຄວາມສ່ຽງໄດ້ລວບລວມໄວ້ໃນຂັ້ນຕອນດຽວກັນ. ສຳລັບເນື້ອທີ່ດິນທີ່ພິສູດເພື່ອຕ້ອງການເກັບກູ້ນັ້ນຕ້ອງໄດ້ກຳນົດປະເພດແລະຂອບເຂດຂອງການເກັບກູ້ພ້ອຍດ້ວຍຂໍ້ມູນຂ່າວສານເພື່ອໃຫ້ບັນລຸໄດ້ຕາມແຜນການ. ເນື້ອທີ່ດິນທີ່ໄດ້ຢັ້ງຢືນວ່າບໍ່ຕ້ອງມີການເກັບກູ້ນັ້ນແມ່ນສາມາດໃຫ້ນຳໃຊ້ໄດ້ເລີຍ.

ຢູ່ໃນສປປລາວຄວນໃຫ້ຄວາມສຳຄັນໃນການເຂັ້ມງວດກວດຂັນໃນການສຳຫຼວດພື້ນທີ່ໆຮູ້ແລ້ວຫຼືສົງໃສວ່າມີລະເບີດຕົກຄ້າງເພື່ອຫຼີກລ້ຽງຈາກການເກັບກູ້ເນື້ອທີ່ທີ່ບໍ່ຈຳເປັນແລະຖ້າຫາກເປັນໄປໄດ້ຄວນໃຫ້ນຳໃຊ້ເນື້ອທີ່ທີ່ອະນຸຍາດໃຫ້ນຳໃຊ້ໂດຍບໍ່ຕ້ອງປະຕິບັດການເກັບກູ້ນັ້ນໄດ້ເລີຍ. ຕໍ່ກັບບັນຫາດັ່ງກ່າວນີ້ການສຳຫຼວດຍັງເປັນການຮັບປະກັນໃຫ້ຊັບພະຍາກອນໃນການປະຕິບັດງານເກັບກູ້ລະເບີດໄດ້ນຳໃຊ້ເຂົ້າໃນວຽກງານເກັບກູ້ບ່ອນທີ່ໄດ້ຮັບຜົນກະທົບຈາກລູກລະເບີດຕົກຄ້າງໃນການນຳໃຊ້ເນື້ອທີ່ດິນຢ່າງມີປະສິດທິພາບແລະມີປະສິດທິຜົນເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດແກ່ວຽກງານ.

ໝາຍເຫດ: ຄຳສັບທີ່ວ່າ 'ລບຕ ທີ່ຈະສົ່ງຜົນກະທົບກັບດິນນຳໃຊ້' ຫຼື ຄຳສັບທີ່ວ່າ ຜົນກະທົບ ທີ່ໃຊ້ໃນມາດຕະຖານແຫ່ງຊາດນີ້ຍັງກວມເອົາທັດສະນະດ້ານຄວາມປອດໄພສຳລັບບຸກຄົນທີ່ໄດ້ຮັບຜົນກະທົບຈາກ ລບຕ.

## 2. ຂອບເຂດ

ມາດຕະຖານແຫ່ງຊາດບົດນີ້ ກວມເອົາທຸກຂະບວນການ ແລະ ຂໍ້ກຳນົດ ໃນການປະຕິບັດການສຳຫຼວດສຳລັບວຽກງານເກັບກູ້ລະເບີດທີ່ດຳເນີນຢູ່ ສປປ ລາວ.

ລາຍລະອຽດທີ່ກຳນົດໃນບົດນີ້ ແມ່ນໃຊ້ກັບການປະຕິບັດງານເກັບກູ້ ລບຕ ເທົ່ານັ້ນ, ບໍ່ໄດ້ນຳໃຊ້ກັບການເກັບກູ້ກັບລະເບີດຝັງດິນ. ການສຳຫຼວດໃຫ້ກັບການເກັບກູ້ກັບລະເບີດຝັງດິນ ໄດ້ກຳນົດໃນ **ບົດທີ 12 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ການເກັບກູ້ກັບລະເບີດຝັງດິນ.**

## 3. ຄວາມຮັບຜິດຊອບລວມໃນການເກັບກຳຂໍ້ມູນ

ທຸກອົງການປະຕິບັດງານດ້ານລະເບີດທີ່ປະຕິບັດງານຢູ່ ສປປ ລາວ ມີຄວາມຮັບຜິດຊອບລວມໃນການເກັບກຳຂໍ້ມູນກ່ຽວກັບໄພຂົ່ມຂູ່ ແລະ ຜົນກະທົບຂອງ ລບຕ ທີ່ມີຕໍ່ຊຸມຊົນ. ຖ້າອົງການປະຕິບັດງານດ້ານລະເບີດຫາກໄດ້ຮັບຂໍ້ມູນໃດໜຶ່ງຕາມທີ່ກຳນົດຂ້າງລຸ່ມນີ້ ຈະຕອ້ງລາຍງານລາຍລະອຽດໃຫ້ ຫ້ອງການ ຄະນະກຳມະການແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ (ຄຊກລ) ປະຈຳແຂວງ ແລະ ຫ້ອງການ ຄຊກລ ສູນກາງ:

ກ. ອຸປະຕິເຫດຈາກ ລບຕ/ກັບລະເບີດຝັງດິນ. ໃຫ້ນໍາໃຊ້ຮ່າງ **ບົດລາຍງານອຸປະຕິເຫດຈາກ ລບຕ/ກັບລະເບີດຝັງດິນ** ແລະ ຮ່າງ **ບົດລາຍງານຜູ້ໄດ້ຮັບເຄາະຮ້າຍຈາກ ລບຕ/ກັບລະເບີດຝັງດິນ.**

ຂ. ພື້ນທີ່ໆມີກັບລະເບີດຝັງດິນ. ໃຫ້ນໍາໃຊ້ຮ່າງ **ບົດລາຍງານພື້ນທີ່ໆມີກັບລະເບີດຝັງດິນ.**

ໝາຍເຫດ: ມີບາງຂໍ້ມູນທີ່ກໍານົດໃນ**ບົດລາຍງານພື້ນທີ່ໆມີກັບລະເບີດຝັງດິນ**ທີ່ຕ້ອງການໃຫ້ມີການກວດກາເນື້ອທີ່ນັ້ນ, ຊຶ່ງການກາດັ່ງກ່າວແມ່ນຢູ່ນອກເໜືອຄວາມສາມາດ ຂອງ ອົງການທີ່ປະຕິບັດການສຶກສາຄວາມສ່ຽງໄພ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ/ກັບລະເບີດຝັງດິນ. ສະນັ້ນ ອົງການທີ່ປະຕິບັດກ່ຽວກັບການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ/ກັບລະເບີດຝັງດິນ ຕ້ອງການໃຫ້ຂຽນຂໍ້ມູນເທົ່າທີ່ຕົນໄດ້ຮັບໃສ່ໃນພາກລາຍລະອຽດທົ່ວໄປຂອງບົດລາຍງານ ແລະ ໃຫ້ສົ່ງບົດລາຍງານທີ່ຍັງບໍ່ຄົບຖ້ວນນັ້ນ ໃຫ້ ຫ້ອງການ ຄຊກລ ປະຈໍາແຂວງ.

ຄ. ລູກລະເບີດບໍ່ທັນແຕກ. ຖ້າ ລບຕ ທີ່ພົບ ຫາກຢູ່ໃນຂອບເຂດທີ່ໄດ້ຮັບອະນຸຍາດ ແລະ ອົງການປະຕິບັດງານດ້ານລະເບີດມີຄວາມສາມາດປະຕິບັດກັບລະເບີດນັ້ນໄດ້ ກໍໃຫ້ປະຕິບັດກັບລະເບີດເຫຼົ່ານັ້ນໄດ້ ແລ້ວລາຍງານມາດຕະການທີ່ໄດ້ປະຕິບັດໃສ່ໃນບົດລາຍງານປົກກະຕິຂອງຕົນ. ຖ້າລະເບີດຫາກເປັນຊະນິດທີ່ບໍ່ສາມາດເກັບກູ້ໄດ້ ກໍໃຫ້ລາຍງານລາຍລະອຽດດັ່ງນີ້:

(1) ທີ່ຕັ້ງຂອງລະເບີດ ໂດຍຕົວເລກອ້າງອີງທາງແຜນທີ່ ຫຼື ຕົວເລກຊີ້ບອກລະບົບຕໍາແໜ່ງທີ່ຕັ້ງຂອງໂລກ (GPS). ຄວນສະໜອງແຜນວາດທີ່ຕັ້ງຂອງລູກລະເບີດມານໍາ.

(2) ຊະນິດ ແລະ ຈໍານວນຂອງລູກລະເບີດ. ຖ້າຮູ້ ກໍ່ໃຫ້ບອກຊື່ຂອງລູກລະເບີດພ້ອມ. ຖ້າບໍ່ຮູ້ກໍໃຫ້ບັນລະຍາຍລາຍລະອຽດຮູບຮ່າງຂອງລະເບີດນັ້ນ, ຖ້າເປັນໄປໄດ້ ກໍໃຫ້ຖ່າຍຮູບລະເບີດດັ່ງກ່າວປະກອບນໍາດ້ວຍ.

(3) ລາຍລະອຽດຜົນກະທົບຈາກລູກລະເບີດ ເຊັ່ນ: ຈໍາກັດການນໍາໃຊ້ເນື້ອທີ່ດິນ ຫຼື ຄວາມສ່ຽງທີ່ມີຕໍ່ຊຸມຊົນ.

(4) ລະບົບປັກໝາຍໃດໜຶ່ງທີ່ໄດ້ນໍາໃຊ້ ແລະ ຖ້າຮູ້ ກໍໃຫ້ບອກຜູ້ວາງລະບົບປັກໝາຍພ້ອມ.

(5) ລາຍລະອຽດການຕິດຕໍ່ກັບຜູ້ທີ່ຈະຊ່ວຍຊີ້ບອກທີ່ຕັ້ງຂອງລູກລະເບີດໄດ້.

ສໍາລັບຮ່າງບົດລາຍງານລູກລະເບີດບໍ່ທັນແຕກນັ້ນຍັງບໍ່ທັນມີເທື່ອ. ຂໍ້ມູນດັ່ງກ່າວຂ້າງເທິງ ແມ່ນຕ້ອງການໃຫ້ສົ່ງໃຫ້ ຫ້ອງການ ຄຊກລ ປະຈໍາແຂວງ (ບໍ່ແມ່ນຫ້ອງການ ຄຊກລ ສູນກາງ) ໂດຍວິທີໃດກໍ່ໄດ້ຕາມຄວາມເໝາະສົມ.

ອົງການເກັບກູ້ລະເບີດມີຄວາມຮັບຜິດຊອບໃນການໝາຍທີ່ຕັ້ງຂອງ ລບຕ ໂດຍສະເພາະ ລບຕ ທີ່ບໍ່ນອນຢູ່ໃນເຂດຄວາມຮັບຜິດຊອບຂອງຕົນ ຫຼື ລບຕ ທີ່ຕົນບໍ່ສາມາດທໍາລາຍໄດ້ ເຖິງຢ່າງໃດກໍ່ຕາມ ການໝາຍທີ່ຕັ້ງຂອງລູກລະເບີດແມ່ນໃຫ້ອີງໃສ່ຄວາມເໝາະສົມໃນແຕ່ລະກໍລະນີ. ເພາະບາງຄັ້ງ ການໝາຍລູກລະເບີດກໍອາດຈະເປັນການບອກໃຫ້ຮູ້ວ່າມີລະເບີດຢູ່ທີ່ນັ້ນ ຊຶ່ງອາດຈະເຮັດໃຫ້ລູກລະເບີດຖືກລົບກວນ ຫຼື ຖືກລັກໄປ. ລາຍລະອຽດຂໍ້ແນະນໍາໃນການປັກໝາຍ ລບຕ ກໍານົດໄວ້ໃນ **ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ລະບົບການປັກໝາຍ.**

ນອກນັ້ນ ບັນດາອົງການປະຕິບັດງານດ້ານລະເບີດ ຍັງມີຄວາມຮັບຜິດຊອບລວມໃນການແນະນໍາຊຸມຊົນທ້ອງຖິ່ນໃຫ້ຮູ້ຈັກລະບົບ ແລະ ວິທີການໃນການລາຍງານ ລບຕ ທີ່ພົບເຫັນ.

## 4. ຄວາມຮັບຜິດຊອບຂອງຫ້ອງການ ຄຊກລ ປະຈໍາແຂວງ ໃນການເກັບກໍາຂໍ້ມູນຂ່າວສານ

ຫ້ອງການ ຄຊກລ ປະຈໍາແຂວງ ມີຄວາມຮັບຜິດຊອບ ເພື່ອຮັບປະກັນໃຫ້ມີການສ້າງຕັ້ງລະບົບ ແລະ ລະບຽບການ

ເພື່ອເກັບກຳລວບລວມແລະການລາຍງານຂໍ້ມູນທີ່ກ່ຽວຂ້ອງກັບການປະຕິບັດງານດ້ານລະເບີດ. ລະບົບເກັບກຳຂໍ້ມູນດັ່ງກ່າວຈະໄດ້ນຳໃຊ້ຊັບພະຍາກອນຂອງຫ້ອງການ ຄຊກລ ປະຈຳແຂວງ ແລະ ເມືອງ ລວມທັງ ອຳນາດການປົກຄອງທ້ອງຖິ່ນ. ຊັບພະຍາກອນ ຂອງອົງການປະຕິບັດງານ ດ້ານລະເບີດທີ່ປະຕິບັດງານຢູ່ພາຍໃນແຂວງ, ບ້ານ ແລະ ຊຸມຊົນທີ່ເປັນຕົວຫຼັກ ເພື່ອເກັບກຳແລະນຳສົ່ງຂໍ້ມູນໃຫ້.

ໝາຍເຫດ: ຄວາມຮັບຜິດຊອບນີ້ ລວມທັງການແຈ້ງໃຫ້ທຸກອົງການທີ່ມີສ່ວນຮ່ວມ ລວມທັງຊຸມຊົນທ້ອງຖິ່ນ ໃຫ້ຮັບຊາບກ່ຽວກັບລະບົບໃນການເກັບກຳຂໍ້ມູນ.

ລະບົບເກັບກຳຂໍ້ມູນ ຄວນລວມເຖິງລະບົບໃນການຈັດສົ່ງຂໍ້ມູນດ້ວຍຮູບການທີ່ສາມາດສະໜອງໃຫ້ຈາກອຳນາດການປົກຄອງບ້ານ ແລະ ຊຸມຊົນທ້ອງຖິ່ນ ໂດຍຜ່ານອຳນາດການປົກຄອງຂອງແຂວງໃນແຕ່ລະຂັ້ນເພື່ອໄປ ຫ້ອງການ ຄຊກລ ປະຈຳແຂວງ. ຄວນເອົາໃຈໃສ່ສະແຫວງຫາຂໍ້ມູນຢ່າງຕັ້ງໜ້າໃນເວລາທີ່ພະນັກງານ ຂອງ ຫ້ອງການ ຄຊກລ ປະຈຳແຂວງ ແລະ ເມືອງ ລົງຢ້ຽມຢາມກຸ່ມບ້ານ(ເຂດ), ບ້ານ ແລະ ອົງການທີ່ ປະຕິບັດງານຢູ່ໃນແຂວງ (ບໍ່ຈຳເປັນຕ້ອງແມ່ນອົງການປະຕິບັດງານດ້ານລະເບີດ) ແລະ ໃນການຢ້ຽມຢາມສຳນັກງານອົງການຂອງເມືອງ ແລະ ແຂວງ ເປັນຕົ້ນ ແມ່ນໂຮງໝໍ.

ຫ້ອງການ ຄຊກລ ປະຈຳແຂວງ ເປັນຜູ້ເກັບກຳແລະຮັກສາຂໍ້ມູນອີງຕາມ ຂໍ້4.1 ດັ່ງລຸ່ມນີ້. ເມື່ອໄດ້ຮັບຂໍ້ມູນບໍ່ຄົບຖ້ວນ ຫ້ອງການ ຄຊກລ ປະຈຳແຂວງ ຄວນວາງມາດຕະການລົງຕິດຕາມເພື່ອເຮັດໃຫ້ຂໍ້ມູນດັ່ງກ່າວນັ້ນຄົບຖ້ວນ. ຫ້ອງການ ຄຊກລ ປະຈຳແຂວງຕ້ອງຮັບປະກັນ ໃນການສົ່ງຂໍ້ມູນຂ່າວສານບໍ່ໃຫ້ມີການຜິດພາດຊ້ຳກັນ.

### 4.1. ການປະຕິບັດຕໍ່ຂໍ້ມູນທີ່ໄດ້ຮັບ

ຫ້ອງການ ຄຊກລ ປະຈຳແຂວງ ຈະເປັນຮັບຂໍ້ມູນຂ່າວສານຈາກລະບົບເກັບກຳຂໍ້ມູນຂອງຕົນ (ເບິ່ງຂໍ້ທີ 4 ຂ້າງເທິງ) ຫຼື ຫ້ອງການ ຄຊກລ ສູນກາງສົ່ງໃຫ້. ຫ້ອງການ ຄຊກລ ປະຈຳແຂວງ ຈະປະຕິບັດຕໍ່ຂໍ້ມູນຂ່າວສານທີ່ໄດ້ຮັບດັ່ງລຸ່ມນີ້:

ກ. ຂໍ້ມູນອຸປະຕິເຫດ ແລະ ຜູ້ປະສົບເຄາະຮ້າຍຈາກລະເບີດ.

(1) ຮັບປະກັນວ່າຜູ້ປະສົບເຄາະຮ້າຍທີ່ລອດຊີວິດ ຫຼື ຄອບຄົວຂອງເຂົາເຈົ້າ ໄດ້ຮັບການແນະນຳໃຫ້ຮູ້ ກ່ຽວກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ ທີ່ມີຢູ່ໃນແຂວງ ແລະ ຢູ່ສູນກາງ (ລະດັບຊາດ).

(2) ຖ້າສາມາດປະຕິບັດໄດ້ກໍໃຫ້ແຈ້ງ ໃຫ້ອົງການປະຕິບັດງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ ທີ່ປະຕິບັດງານຢູ່ໃນແຂວງກ່ຽວຂ້ອງຊາບ ກ່ຽວກັບຜູ້ປະສົບເຄາະຮ້າຍທີ່ລອດຊີວິດ.

(3) ສົ່ງສຳເນົາຂອງ **ບົດລາຍງານອຸປະຕິເຫດຈາກ ລບຕ/ກັບລະເບີດຝັງດິນ** ແລະ **ບົດລາຍງານຜູ້ປະສົບເຄາະຮ້າຍຈາກ ລບຕ/ກັບລະເບີດຝັງດິນ**ໃຫ້ ຫ້ອງການ ຄຊກລ ສູນກາງ ຫຼັງຈາກຫ້ອງການ ຄຊກລ ປະຈຳແຂວງ ໄດ້ປະກອບຄຳເຫັນໃສ່ບົດລາຍງານກ່ຽວກັບມາດຕະການທີ່ໄດ້ປະຕິບັດໃນເບື້ອງຕົ້ນ.

ຂ. ພື້ນທີ່ໆມີກັບລະເບີດຝັງດິນ:

(1) ຮັບປະກັນໃຫ້ພື້ນທີ່ໆມີກັບລະເບີດຝັງດິນໄດ້ຮັບການປັກໝາຍເຂດແດນ ແລະ ລ້ອມຮົ້ວ **ຕາມທີ່ກຳນົດໃນ ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ລະບົບການປັກໝາຍ**. ໃນການປະຕິບັດຄືດັ່ງກ່າວ ແມ່ນຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອດ້ານວິຊາການຈາກອົງເກັບກູ້ລະເບີດ.

(2) ສິ່ງສຳເນົາສະບັບຕົ້ນຂອງ **ບົດລາຍງານພື້ນທີ່ໆມີກັບລະເບີດຝັງດິນ** ໃຫ້ ຫ້ອງການ ຄຊກລ ສູນກາງ ຫຼັງຈາກ ຫ້ອງການ ຄຊກລ ປະຈຳແຂວງ ໄດ້ປະກອບຄຳເຫັນໃສ່ບົດລາຍງານກ່ຽວກັບມາດຕະການທີ່ໄດ້ປະຕິບັດໃນເບື້ອງຕົ້ນ.

ຄ. ບ່ອນທີ່ມີລະເບີດແລະພື້ນທີ່ໆມີລະເບີດຕົກຄ້າງ. ສິ່ງທຸກຂໍ້ມູນທີ່ໄດ້ຮັບໃຫ້ອົງການເກັບກູ້ລະເບີດ ເພື່ອມະນຸດສະທຳຢູ່ພາຍໃນແຂວງ ແລະ ມອບໝາຍໃຫ້ປະຕິບັດໜ້າວຽກຕາມຄວາມເໝາະສົມເພື່ອສືບສວນຫາສາຍເຫດແລະໃຫ້ຄຳແນະນຳໜ້າວຽກໃຫ້ຫຼືມອບຮັບໜ້າວຽກໂດຍກົງໃຫ້ເຂົາເຈົ້າປະຕິບັດ. ສ່ວນມາດຕະການອື່ນໆອາດອີງໃສ່ຜົນໄດ້ຮັບຂອງການສືບສວນທີ່ຂາດບໍ່ໄດ້ ລວມມີດັ່ງນີ້:

(1) ບູລິມະສິດໃນການພິສູດໜ້າວຽກທີ່ພົວພັນກັບໜ້າວຽກອື່ນທີ່ມີຢູ່ໃນແຜນວຽກຂອງແຂວງນັ້ນ. ສິ່ງດັ່ງກ່າວນີ້ຕ້ອງເຫັນໄດ້ເຖິງຜົນກະທົບຈາກ ລບຕ ຮ້າຍແຮງຕໍ່ຊຸມຊົນໂດຍເຂັ້ມງວດດ້ານຄວາມປອດໄພ.

(2) ໜ້າວຽກຂອງອົງການເກັບກູ້ລະເບີດຈະເປັນຜູ້ປະບັດນັ້ນຕ້ອງຮັບປະໄດ້ວ່າບັນຈຸໄວ້ໃນແຜນວຽກທີ່ຈະເຮັດໃນຕໍ່ໜ້າ.

(3) ມາດຕະການການແຈ້ງຄວາມຄືບໜ້າບົດລາຍງານຂອງອົງການຫຼືຊຸມຊົນ.

(4) ການຕິດຕາມການປະຕິບັດງານຂອງອົງການປະຕິບັດງານດ້ານລະເບີດ.

ງ. ຮັບປະກັນວ່າທຸກໆບົດລາຍງານຂໍ້ມູນຂ່າວສານທີ່ລາຍງານໃຫ້ແກ່ອົງການຫຼືຊຸມຊົນແມ່ນຄົບຖ້ວນ.

ຈ. ໃຫ້ ຫ້ອງການ ຄຊກລ ປະຈຳເມືອງ ທີ່ກ່ຽວຂ້ອງຮັບຮູ້ຂໍ້ມູນກ່ຽວກັບກິດຈະກຳຕ່າງໆທີ່ເກີດຂຶ້ນຢູ່ພາຍໃນເມືອງຂອງເຂົາເຈົ້າ.

ເມື່ອພື້ນທີ່ໆມີລະເບີດຕົກຄ້າງໄດ້ຖືກປັກຫຼັກໝາຍເຂດແດນ ແລະ ພື້ນທີ່ນັ້ນຍັງບໍ່ທັນຈັດເປັນບຸລິມະສິດໃນການເກັບກູ້ເທື່ອ ສະນັ້ນ ຫ້ອງການ ຄຊກລ ປະຈຳແຂວງ ມີຄວາມຮັບຜິດຊອບໃນການປົກປັກຮັກສາລະບົບປັກໝາຍເຂດແດນທີ່ໄດ້ວາງໄວ້. ລາຍລະອຽດຄວາມຮັບຜິດຊອບຄືດັ່ງກ່າວໄດ້ກຳນົດໄວ້ໃນ **ບົດທີ 4 ຂອງ ມາດຕະຖານແຫ່ງຊາດ ວ່າດ້ວຍ ລະບົບການປັກໝາຍ.**

## 5. ມາດຕະຖານການສຳຫຼວດ

ມາດຕະຖານການສຳຫຼວດ ສຳລັບທຸກການສຳຫຼວດກ່ຽວກັບ ລບຕ ທີ່ປະຕິບັດຢູ່ໃນ ສປປ ລາວ ມີຄື:

ກ. ການວັດແທກໄລຍະທາງ. ການວັດແທກໄລຍະທາງ ໃຫ້ວັດແທກໄປຕາມພື້ນຮາບ ແລະ ຄວາມຊັດເຈນຂອງການວັດແທກແມ່ນ +/ -0.3 ແມັດ.

ຂ. ການວັດແທກທິດທາງ. ການວັດແທກທິດທາງແມ່ນໃຫ້ວັດແທກທັງມູມໄປ ແລະ ມູມກັບ ເພື່ອເປັນການກວດກາຄວາມຜິດດ່ຽງ ແລະ ການບັນທຶກຄວາມຊັດເຈນຂອງການວັດແທກທິດທາງແມ່ນ +/ -2 ອົງສາ.

ຄ. ຕົວເລກຊີ້ບອກຕຳແໜ່ງທີ່ຕັ້ງຂອງໜ່ວຍໂລກ (GPS). ການສ້າງແຜນທີ່ datum ແມ່ນນຳໃຊ້ລະບົບ WGS 84. ລະບົບການໝາຍຈຸດພິກັດ (Magellan GPSs) ຫຼື ຮູບແບບຂອງຈຸດພິກັດ (Garmin GPS) ແມ່ນນຳໃຊ້ລະບົບອົງສາ ແລະ ວິນາທີ, ຊຶ່ງຢ່າງໜ້ອຍຕ້ອງມີຫ້າໂຕເລກ (ddd.ddddd°).

ອົງການຕ່າງໆອາດຈະນຳໃຊ້ການຕັ້ງຄ່າທີ່ແຕກຕ່າງກັນສຳລັບໜ້າວຽກການສຳຫຼວດພາຍໃນຂອງຕົນເອງ ແຕ່ການຕັ້ງຄ່າທີ່ລະບຸໄວ້ຂ້າງເທິງແມ່ນນຳໃຊ້ເມື່ອມີການແລກປ່ຽນຂໍ້ມູນລະຫວ່າງອົງການ ແລະ ເມື່ອມີການລາຍງານໃຫ້ກັບຫ້ອງການ ຄຊກລ.

## 6. ລະຫັດເລກໝາຍປະຈຳໜ້າວຽກ

ລະບົບລະຫັດເລກໝາຍປະຈຳໜ້າວຽກສຳລັບການປະຕິບັດງານດ້ານລະເບີດໃນລະດັບຊາດ ແມ່ນຍັງບໍ່ທັນໄດ້ກຳນົດຂຶ້ນເທື່ອ. ສະນັ້ນ ອົງການປະຕິບັດງານດ້ານລະເບີດ ຈະຕ້ອງສ້າງລະບົບລະຫັດເລກໝາຍປະຈຳໜ້າວຽກຂອງຕົນຂຶ້ນ ເພື່ອບໍລິຫານໜ້າວຽກເກັບກູ້ລະເບີດຂອງຕົນ.

ຄຊກລ ຈະກຳນົດລະຫັດຕົວອັກສອນ 3 ໂຕ ໃຫ້ແຕ່ລະອົງການປະຕິບັດງານດ້ານລະເບີດ. ລະຫັດຕົວອັກສອນເຫຼົ່ານີ້ໃຫ້ຕື່ມໃສ່ຂ້າງໜ້າ ຂອງ ລະບົບລະຫັດເລກໝາຍປະຈຳໜ້າວຽກຂອງອົງການກ່ຽວຂ້ອງ ແລະ ໃຫ້ນຳໃຊ້ກັບທຸກໜ້າວຽກ ແລະ ທຸກບົດລາຍງານທີ່ອົງການກ່ຽວຂ້ອງສ້າງຂຶ້ນ.

## 7. ເຄື່ອງໝາຍການສຳຫຼວດ

ເຄື່ອງໝາຍການສຳຫຼວດແມ່ນໃຊ້ເພື່ອກຳນົດຈຸດອ້າງອີງຂອງເຄື່ອງໝາຍການສຳຫຼວດອື່ນໆ ຫຼື ເພື່ອໝາຍຂອບເຂດເນື້ອທີ່ດິນສຳລັບການເກັບກູ້. ເຄື່ອງໝາຍການສຳຫຼວດອາດຈະສ້າງຂຶ້ນໃນລະຫວ່າງການສຳຫຼວດດ້ານວິຊາການ (ຖ້າມີການສຳຫຼວດດ້ານວິຊາການ) ຫຼື ອາດຈະສ້າງຂຶ້ນພາຍຫຼັງສຳເລັດການເກັບກູ້ ໃນເວລາເຮັດບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້. ເຄື່ອງໝາຍການສຳຫຼວດປະກອບມີ:

ກ. ຈຸດອ້າງອີງ (RP). ຈຸດອ້າງອີງແມ່ນຈຸດຄົງທີ່ໆອ້າງອີງເຖິງທີ່ຕັ້ງໃດໜຶ່ງ ແລະ ຕັ້ງຢູ່ໃນໄລຍະທີ່ເໝາະສົມຢູ່ນອກພື້ນທີ່ໆມີການປັກໝາຍເຂດແດນ. ຈຸດອ້າງອີງໃຫ້ກຳນົດເອົາສິ່ງທີ່ເປັນລັກສະນະຖາວອນ ແລະ ເດັ່ນສາມາດກຳນົດໄດ້ງ່າຍໃນບໍລິເວນນັ້ນ. ຈຸດອ້າງອີງ ຕ້ອງເປັນຈຸດທີ່ສາມາດກຳນົດຈຸດມາດຕະຖານ (BM) ຈາກຈຸດອ້າງອີງໄດ້.

ຂ. ຈຸດມາດຕະຖານ (BM). ຈຸດມາດຕະຖານ ແມ່ນຈຸດອ້າງອີງທີ່ຄົງທີ່ໃຊ້ເພື່ອກຳນົດທີ່ຕັ້ງຈຸດອື່ນທີ່ຢູ່ຕາມເຂດແດນຂອງພື້ນທີ່ໆໄດ້ປັກໝາຍ. ສຳລັບເນື້ອທີ່ເກັບກູ້ທີ່ກວ້າງໃຫຍ່ເຄື່ອງໝາຍຈຸດມາດຕະຖານອາດຈະຖືກສ້າງຂຶ້ນຫຼາຍກວ່າໜຶ່ງຈຸດ ເພື່ອໃຫ້ກວມເອົາເນື້ອທີ່ທັງໝົດໃນສະໜາມເກັບກູ້. ເຄື່ອງໝາຍຈຸດມາດຕະຖານອາດຈະຖືກສ້າງຕາມເຂດແດນຂອງພື້ນທີ່ໆໄດ້ປັກໝາຍແຕ່ຈະບໍ່ໃຫ້ແຕະຕ້ອງຈຸດດັ່ງກ່າວເມື່ອມີການນຳໃຊ້ດິນ.

ຄ. ຈຸດເລີ່ມຕົ້ນ (SP). ຈຸດເລີ່ມຕົ້ນແມ່ນຈຸດລ້ຽວຕາມເຂດແດນຂອງເນື້ອທີ່ໆໄດ້ປັກໝາຍ ຊຶ່ງການກຳນົດເຂດແດນຂອງສະໜາມເກັບກູ້ແມ່ນຈະເລີ່ມຈາກຈຸດນີ້.

ງ. ຈຸດລ້ຽວ (TPs). ຈຸດລ້ຽວແມ່ນຈຸດທຸກຈຸດທີ່ຢູ່ຕາມເຂດແດນຂອງພື້ນທີ່ໆໄດ້ປັກໝາຍ ຈຸດເຫຼົ່ານີ້ຈະເປັນຈຸດທີ່ເຂດແດນຈະປ່ຽນທິດທາງ.

ຈ. ຈຸດລະຫວ່າງກາງ (IPs). ຖ້າໄລຍະລະຫວ່າງ 2 ຈຸດລ້ຽວຫາກຫ່າງກັນເກີນ 50 ແມັດ ແມ່ນໃຫ້ນຳໃຊ້ຈຸດລະຫວ່າງກາງ ເພື່ອຮັບປະກັນໃຫ້ທິດທາງລະຫວ່າງຈຸດລ້ຽວສາມາດຕິດຕາມໄດ້ງ່າຍ ແລະ ມີຊັດເຈນ.

## 8. ການສຳຫຼວດແລະການອະນຸຍາດໃຫ້ເກັບກູ້

ຕາມທຳນຽມປະຕິບັດ, ການສຳຫຼວດພື້ນທີ່ໆຮູ້ຫຼືສົງໃສວ່າມີລະເບີດຕົກຄ້າງ ຕ້ອງໃຫ້ມີການປະຕິບັດເກັບກູ້. ແຕ່ດຽວນີ້ແມ່ນໄດ້ປ່ຽນແລ້ວ. ເປົ້າໝາຍໃນການສຳຫຼວດແມ່ນແນໃສ່ ເພື່ອຢັ້ງຢືນໃຫ້ເຫັນຈາກຄວາມສົງໃສວ່າມີລະເບີດບໍ່ທັນແຕກຕົກຄ້າງແລະການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນແມ່ນຜ່ານຂັ້ນຕອນເອກະສານໃນການສຳຫຼວດ. ເນື້ອທີ່ດິນທີ່ຖືກເກັບເຕັມຮູບແບບກໍ່ຕໍ່ເມື່ອມີຫຼັກຖານພົບເຫັນລະເບີດບໍ່ທັນແຕກຕົກຄ້າງເຊິ່ງມີທ່າອ່ຽງວ່າຈະໄດ້ຮັບຜົນກະທົບເມື່ອນຳໃຊ້ຕອນດິນດັ່ງກ່າວ. ເມື່ອບໍ່ພົບເຫັນຫຼັກຖານປະກົດຂື້ນມາເຊັ່ນວ່າລະເບີດບໍ່ທັນແຕກຕົກຄ້າງໃນຕອນດິນດັ່ງກ່າວອາດອະນຸຍາດໃຫ້ນຳໃຊ້ໄດ້ເລີຍພາຍຫຼັງຜ່ານການສຳຫຼວດ.

ການສຳຫຼວດທີ່ພົວພັນກັບເນື້ອທີ່ດິນທີ່ມີເບີດບໍ່ທັນແຕກຕົກຄ້າງແມ່ນໝາຍເຖິງທຸກປະເພດການສຳຫຼວດ ເຊັ່ນ:ການສຳຫຼວດທົ່ວໄປ,ການສຳຫຼວດດ້ານວິຊາການ ແລະ ກິດຈະກຳການເກັບກຳຂໍ້ມູນອື່ນໆ. ມັນຍັງແມ່ນທຸກຄວາມພະຍາຍາມເພື່ອພສູດແລະໄຈ້ຂໍ້ມູນທີ່ໄດ້ເກັບກຳມາ. ການສຳຫຼວດ ຍັງກວມເອົາຂອບເຂດວຽກງານເກັບກູ້, ການທຳລາຍເຄື່ອນທີ່ແລະເກັບກູ້ເນື້ອທີ່ແຕ່ບໍ່ໄດ້ລວມຂອບເຂດການເກັບກູ້ເຕັມຮູບແບບ.

ໝາຍເຫດ: ໃນມາດຕະຖານແຫ່ງຊາດຄຳວ່າ"ການສຳຫຼວດ"ເມື່ອນຳໃຊ້ໃນຄວາມໝາຍດຽວແມ່ນໝາຍເຖິງຂັ້ນຕອນການສຳຫຼວດທັງໝົດ. ເຊັ່ນວ່າການສຳຫຼວດທົ່ວໄປຫຼືການສຳຫຼວດດ້ານວິຊາການຖ້າອີງໃສ່ຄວາມໝາຍສະເພາະຄຳວ່າການສຳຫຼວດທົ່ວໄປຫຼືດ້ານວິຊາການແລ້ວແມ່ນໄດ້ລວມເອົາໄວ້ໃນຄຳວ່າການສຳຫຼວດ.ບັນດາອົງການເກັບກູ້ອາດຈະນຳໃຊ້ຄຳສັບຂອງຕົນເອງສ້າງຂື້ນເພື່ອ ປະກອບໃສ່ກິດຈະກຳໃນການສຳຫຼວດ.

ການປ່ຽນແປງເປົ້າໝາຍໃນການສຳຫຼວດບໍ່ໝາຍຄວາມວ່າຜົນທີ່ໄດ້ຮັບຈາກການສຳຫຼວດທີ່ເຄີຍປະຕິບັດຜ່ານມາແມ່ນຍັງມີຄວາມຈຳເປັນໃນວຽກເກັບກູ້ເຕັມຮູບແບບ. ເຖິງຢ່າງໃດກໍ່ຕາມ ຂໍ້ມູນທັງໝົດທີ່ກ່າວມານັ້ນ ແມ່ນຍັງມີຄວາມຕ້ອງການ, ຕົວຢ່າງການກຳນົດປະເພດແລະຂອບເຂດເນື້ອທີ່ໆມີລະເບີດຕົກຄ້າງຕ້ອງໄດ້ມີການເກັບກູ້ແລະຢັ້ງຢືນໃນຂັ້ນຕອນການສຳຫຼວດ.

### 8.1. ການຂໍອະນຸຍາດການສຳຫຼວດແລະເກັບກູ້ເນື້ອທີ່

ການຂໍອະນຸຍາດການສຳຫຼວດ ແລະການເກັບກູ້ເນື້ອທີ່ໄດ້ເຈາະຈົງສະເພາະເນື້ອທີ່ທີ່ມີລະເບີດຕົກຄ້າງເທົ່ານັ້ນ. ໃນ ສປປລາວເນື້ອທີ່ເຫຼົ່ານີ້ ໄດ້ຢັ້ງຢືນວ່າພື້ນທີ່ທີ່ຈະເກັບກູ້ເຫຼົ່ານັ້ນແມ່ນ ພື້ນທີ່ໆຮູ້ຫຼືສົງໃສວ່າມີລະເບີດຕົກຄ້າງ. ເປັນຕົ້ນວ່າຈະເລືອກເນື້ອທີ່ໆນອນຢູ່ໃນແຜນບຸລິມະສິດຂອງລັດຖະບານແຫ່ງສປປລາວໃນປະຈຸບັນ.

ໝາຍເຫດ: ທຸກການຢັ້ງຢືນພິສູດໃຫ້ແກ່ການເກັບກູ້ຄວນໃຫ້ບຸລິມະສິແລະຕີລາຄາສູງຕໍ່ວຽກງານດັ່ງກ່າວເພື່ອໃຫ້ສອດຄ່ອງກັບເປົ້າໝາຍພັດທະນາສະຫະສະວັດ ຂໍ້ທີ 9 ບຸລິມະສິດດັ່ງກ່າວຕ້ອງສອດຄ່ອງກັບແຜນຍຸດທະສາດໃນປະຈຸບັນ ຂອງ ໜ່ວຍງານເກັບກູ້ລະເບີດຫຼືບຸລິມະສິດອື່ນຊຶ່ງໄດ້ຮັບຄວາມເຫັນດີຈາກ ຫ້ອງການ ຄຊກລ ປະຈຳແຂວງ.

ໝາຍເຫດ: ພາຍຫຼັງທີ່ໄດ້ປຶກສາຫາລືກັບກຸ່ມທີ່ຈະໄດ້ຜົນປະໂຫຍດລວມທັງຊຸມຊົນທີ່ໄດ້ຮັບຜົນກະທົບຈາກລູກລະເບີດບໍ່ທັນແຕກແລະບັນດາອົງການເກັບກູ້ລະເບີດແລ້ວຄະນະກຳມະການປະສານງານເກັບກູ້ລະເບີດຂັ້ນ ແຂວງຈະເປັນຜູ້ເຈາະຈົງເລືອກ ເນື້ອທີ່ເກັບກູ້ຕົວຈິງພາຍໃນແຂວງດັ່ງກ່າວ.

ທຸກເນື້ອທີ່ໆໄດ້ພິສູດເພື່ອຢາກເກັບກູ້ຕ້ອງຜ່ານຂັ້ນຕອນການສຳຫຼວດຊຶ່ງໄດ້ເຮັດຕາມຂັ້ນຕອນການສຳຫຼວດທົ່ວໄປແລະສຳຫຼວດດ້ານວິຊາການແລະຖ້າເຫັນວ່າຈຳເປັນຕ້ອງໄດ້ຈຳກັດຈຳນວນໃນການເກັບກູ້ເນື້ອທີ່ຕາມຂໍ້ມູນທີ່ມີຢູ່ກໍ່ອະນຸຍາດໃຫ້ລົງມືປະຕິບັດໄດ້. ຖ້າຫາກວ່າການເກັບກຳຂໍ້ມູນໄດ້ມາຄົບຖ້ວນກໍ່ມີການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນນັ້ນໂລດຫຼືພາກສ່ວນອື່ນກໍ່ເກີດຂື້ນເຊັ່ນກັນ. ດັ່ງນັ້ນ, ຖ້າວ່າຂັ້ນຕອນການພິສູດເຫັນວ່າຈຳເປັນຕ້ອງໄດ້ເກັບກູ້ເຕັມຮູບແບບແລະການພື້ນທີ່ນັ້ນທີ່ໄດ້ເຈາະຈົງເລືອກມາຈາກການສຳຫຼວດກໍ່ຈະກາຍເປັນການສຳຫຼວດເພື່ອເກັບກູ້ເຕັມຮູບແບບ.

ໃນລະຫວ່າງການສຳຫຼວດຕ້ອງນຳໃຊ້ການຄຸ້ມຄອງຄວາມສ່ຽງ[1]. ໃນເວລາສຳຫຼວດດ້ານຄວບຄຸມຄວາມສ່ຽງຕ້ອງໄດ້ນຳໃຊ້ລາຍລະອຽດຂອງຂໍ້ກຳນົດຊຶ່ງລະບຸໄວ້ໃນຂໍ້ 10 ແລະ10.1 ຂ້າງລຸ່ມ. ການວິນິໃສການຄຸ້ມຄອງດ້ານຄວາມ ສ່ຽງເພື່ອຮັບຮູ້ຕໍ່ທ່າອ່ຽງອາດເກີດຂຶ້ນໃນການນຳໃຊ້ເນື້ອທີ່ດິນຕອນນັ້ນ.

ທຸກເຫດຜົນຄວາມພະຍາຍາມໃນຂັ້ນຕອນການສຳຫຼວດແມ່ນມີຄວາມຕ້ອງການຜົນງານໜ້າເຊື່ອຖືປະກົດອອກມາໃຫ້ເປັນຮູບປະທຳ. ຕົວຢ່າງ ການຕັດສິນໃຈໃຫ້ເກັບກູ້ເນື້ອທີ່ພາງແລະປະຕິບັດການເກັບກູ້ເນື້ອທີ່ສົມບູນ.

ໝາຍເຫດ: ຄຳສັບທີ່ວ່າ ທຸກຄວາມເຫດຜົນຄວາມພະຍາຍາມ ອະທິບາຍເຖິງ ການປະຕິບັດໃນລະດັບຕ່ຳທີ່ສາມາດຍອມຮັບໄດ້ຂອງຄວາມພະຍາຍາມ ເພື່ອດຳເນີນການສຳຫຼວດໃນພື້ນທີ່ໆມີການຕົກຄ້າງ ຂອງ ລບຕ. ທຸກເຫດຜົນຄວາມພະຍາຍາມຈະຖືກນຳໃຊ້ ເມື່ອພິຈາລະນາເຫັນວ່າການເພີ່ມຊັບພະຍາກອນເປັນສິ່ງທີ່ບໍ່ສົມເຫດສົມຜົນ ເມື່ອຄຳນຶງເຖິງຜົນໄດ້ຮັບຕ່າງໆທີ່ຄາດຫວັງເອົາໄວ້.[2]

ໝາຍເຫດ: ການເກັບກູ້ແບບຄົບຖ້ວນ ໝາຍເຖິງການເກັບກູ້ຕ້ອງໄດ້ສຳລັດຕາມຂໍ້ກຳນົດຂອງການເກັບກູ້, ຊຶ່ງໝາຍຄວາມວ່າພື້ນທີ່ທັງໝົດທີ່ຖືກກຳນົດໃຫ້ເກັບກູ້ແມ່ນຕ້ອງໄດ້ຖືກເກັບກູ້ຕາມຄວາມເລິກທີ່ກຳນົດສຳລັບໜ້າວຽກການເກັບກູ້ ແລະ ໄດ້ຄຸນນະພາບ.

ເຈົ້າຂອງຫຼືຜູ້ນຳໃຊ້ເນື້ອທີ່ດິມີສ່ວນຮ່ວມໃນການສຳຫຼວດ,ການປະເມີນຄວາມສ່ຽງແລະຂັ້ນຕອນການອະນຸຍາດໃຫ້ເກັບກູ້ເນື້ອທີ່ດິນເພື່ອຮັບປະກັນຄວາມຖືກຕ້ອງໃນຂັ້ນຕອນການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນຕາມຄວາມເປັນຈິງ.

ໃຫ້ປະຕິບັດຕາມຫຼັກການຂ້າງເທິງຄື: *ເນື້ອທີ່ດິນທີ່ເຫັນວ່າມີຄວາມປອດໄພແລະຂັ້ນຕອນເອກະສານທີ່ໜ້າເຊື່ອຖືໄດ້ຖືກຈັດຕັ້ງປະຕບັດເທົ່ານັ້ນຈິ່ງອະນຸຍາດໃຫ້ນຳໃຊ້ ເນື້ອທີ່ດິນຕອນດັ່ງກ່າວໄດ້.*[3]

ໝາຍເຫດ: ຖ້າຄວາມຕ້ອງການຂອງການເກັບກູ້ຫາກກຳນົດໃນສັນຍາທາງທຸລະກິດ ຫຼື ຂໍ້ຕົກລົງທາງການອື່ນໆ ການສຳຫຼວດເພື່ອກຳນົດຄວາມຕ້ອງການຂອງການເກັບກູ້ແມ່ນບໍ່ຈຳເປັນຕ້ອງປະຕິບັດຕາມທີ່ລະບຸໃນຫົວຂໍ້ນີ້. ແຕ່ການສຳຫຼວດອາດຍັງຈຳເປັນຕ້ອງປະຕິ ບັດເພື່ອຈຸດປະສົງໃນການປັກໝາຍເຂດແດນ ແລະ ເກັບກຳຂໍ້ມູນ.

### 8.1.1. ການເກັບກູ້ເນື້ອທີ່ດິນທີ່ກວ້າງໃຫຍ

ເວລາຈະເກັບກູ້ເນື້ອດິນທີ່ກວ້າງໃຫຍ່ນັ້ນມັນຕ້ອງແບ່ງອອກເປັນຫຼາຍຕອນຕາມຂະໜາດສາມາດເຮັດການສຳຫຼວດໄດ້. ແຕ່ລະຂະໜາດໃຫ້ເຮັດເປັນຕອນດຽວຍ້ອນວ່າຂັ້ນຕອນການສຳຫຼວດຂອງອົງການເກັບກູ້ລະເບີດແມ່ນບໍ່ມີຂອບຈຳກັດກັດສາມາດປະຕິບັດການສຳຫຼວດເນື້ອທີ່ຫຼາຍໆຕອນໃນເທື່ອດຽວໄດ້.

ຖ້າຫາກວ່າບໍ່ພົບເຫັນລະເບີດບໍ່ທັນແຕກຕົກຄ້າງຕາມເຂດແດນເນື້ອທີ່ດິນທີ່ສຳຫຼວດໃນລະຫວ່າງການສຳຫຼວດນັ້ນ,ເນື້ອທີ່ດິນຕອນດັ່ງກ່າວແມ່ນອະນຸຍາດໃຫ້ນຳໃຊ້ເນື້ອທີ່ນັ້ນໄດ້ເລີຍ.

ເມື່ອມີການປ່ຽນເຂດແດນໃຫ້ເປັນເນື້ອທີ່ພິເສດຕ້ອງໄດ້ມີເຄື່ອງໝາຍບອກໃຫ້ຮູ້ວ່າເນື້ອທີ່ນັ້ນບໍ່ມີລະເບີດຕົກຄ້າງຕາມເຂແດນທີ່ໄດ້ຢັ້ງຢືນວ່າມີຄວາມປອດໄພ.

---

1. ແຜນຍຸດທະສາດໜ່ວຍງານເກັບກູ້ລະເບີດໃນຂໍ້18.1ແມ່ນມາດຕະການຫຼັກຄື" "ບຸລິມະສິດໃນການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນທີ່ໄດ້ຜ່ານການຄຸ້ມຄອງຄວາມສ່ຽງໄພ....."

2. ຄັດມາຈາກມາດຕ ຖານການປະຕິບັດງານເກັບກູ້ລະເບີດສາກົນ 08.20.

3. ຄັດມາຈາກມາດຕ ຖານການປະຕິບັດງານເກັບກູ້ລະເບີດສາກົນ 08.20.

## 9. ການປະຕິບັດງານການສຳຫຼວດສະເພາະ

ໃນຂໍ້ນີ້ໄດ້ລະບຸຂໍ້ກຳນົດກິດຈະກຳການສຳຫຼວດສະເພາະການສຳຫຼວດທົ່ວໄປແລະການສຳຫຼວດດ້ານວິຊາການຊຶ່ງແມ່ນພາກສ່ວນການປະຕິບັດຂັ້ນຕອນການສຳຫຼວດທົ່ວໃປ.ທັງສອງກິດຈະກຳເຫຼົ່ານີ້ໄດ້ລວມໄວ້ໃນການຄຸ້ມຄອງຄວາມສ່ຽງຊຶ່ງກ່ຽວຂ້ອງກັບການຕັດສິນໃຫ້ມີການນຳໃຊ້ເນື້ອທີ່ດິນ. ການຄຸ້ມຄອງຄວາມສ່ຽງໄດ້ຖືກລວບລວມລາຍລະອຽດໄວ້ໃນ ຂໍ້10 ລຸ່ມນີ້.

ໃນເມື່ອມີການແຍກການສຳຫຼວດທົ່ວໄປ ແລະ ການສຳຫຼວດດ້ານວິຊາການອອກຈາກກັນ ຄວນໄດ້ຄວາມເຫັນພ້ອມຈາກໜ່ວຍງານດຽວກັນສາກ່ອນໃນການປະຕິບັດໃຫ້ເກີດດອກອອກຜົນ.

ໝາຍເຫດ: ບັນດາອົງການເກັບກູ້ລະເບີດອາດຈະນຳໃຊ້ຄຳສັບຂອງຕົນເອງໃນການສຳຫຼວດທົ່ວໄປແລະການສຳຫຼວດດ້ານວິຊາການຊຶ່ງໄດ້ລະບຸໄວ້ໃນມາດຕະຖານແຫ່ງຊາດສະບັບນີ້.

ກ່ອນຈະປະຕິບັດກິດຈະກຳໃດໜຶ່ງຄວນມີຂໍ້ມູນໜ້າເຊື່ອຖືໄດ້ຂອງອົງການທີ່ກ່ຽວຂ້ອງກັບວຽກງານເກັບກູ້ລະເບີດ. ລວມມີດັ່ງນີ້:

ກ. ສະຖານທີ່ໆຮູ້ ຫຼື ສົງໃສວ່າມີເນື້ອທີ່ໆມີລະເບີດຕົກຄ້າງຕ້ອງໄດ້ຢັ້ງຢືນເພື່ອໃຫ້ມີການເກັບກູ້.

ຂ. ໃຫ້ເຈົ້າຂອງເນື້ອທີ່ດິນແລະຜູ້ນຳໃຊ້ເຂົ້າມີສ່ວນຮ່ວມຂັ້ນຕອນການສຳຫຼວດນັ້ນ.

ຄ. ທ່າອ່ຽງໃນການນຳໃນເນື້ອທີ່ດິນອາດມີຜົນກະທົບຕໍ່ການປະເມີນດ້ານຄວາມສ່ຽງໃດໜຶ່ງ.

ສ່ວນຂໍ້ 9.1 ແລະ 9.2 ຂ້າງລຸ່ມນີ້ ອະທິບາຍສະເພາະກ່ຽວກັບເນື້ອທີ່ດິນທີ່ໄດ້ກຳນົດໃຫ້ມີການເກັບກູ້, ພື້ນທີ່ເຫຼົ່ານີ້ໃຫ້ແບ່ງເນື້ອທີ່ອອກເປັນສ່ວນໆ ອີງຕາມປະເພດຂອງ ລບຕ ທີ່ກວດພົບ (ລວມທັງ ສ່ວນທີ່ບໍ່ມີ ລບຕ). ເນື້ອທີ່ດິນທັງໝົດທີ່ກຳນົດໃຫ້ມີການເກັບກູ້ຕ້ອງໄດ້ຖືກອະນຸມັດວ່າມີຄວາມປອດໄພເພື່ອໃຫ້ນຳໃຊ້ໃນຂັ້ນຕອນສຸດທ້າຍຂອງການປະຕິບັດງານ (ການສຳຫຼວດ ແລະ ເກັບກູ້).

ການຕັດສິນໃຈເລືອກເອົາກິດຈະກຳທັງໝົດທີ່ກ່ຽວພັນກັບການສຳຫຼວດເກັບກູ້ ໃຫ້ອະນຸຍາດນຳໃຊ້ເນື້ອທີ່ຕ້ອງມີເອກະສານອະນຸຍາດນຳໃຊ້ຄົບຖ້ວນ. ປະຈຸບັນນີ້ເອກະສານດັ່ງກ່າວຍັງບໍ່ທັນມີແບບຟອມເທື່ອໃນການນຳໃຊ້; ບັນດາອົງການເກັບກູ້ອາດຈະນຳໃຊ້ແບບຟອມຂອງຕົນເອງກ່ອນ.

### 9.1. ການສຳຫຼວດທົ່ວໄປ

ການສຳຫຼວດທົ່ວໄປ ແມ່ນບໍ່ໄດ້ນຳໃຊ້ອຸປະກອນກວດໂລຫະເພື່ອກວດຫາ, ຂຸດຊອກຫາ ຫຼື ເຄື່ອນຍ້າຍ ລບຕ. ການສຳຫຼວດທົ່ວໄປອາດຈະກວມເອົາບາງສ່ວນ ຫຼື ກວມເອົາທັງໝົດຂອງກິດຈະກຳລຸ່ມນີ້.

ກ. ກວດກາຂໍ້ມູນ ເຊັ່ນ: ຂໍ້ມູນການຖິ້ມລະເບີດ, ບົດບັນທຶກການເກັບກູ້, ຂໍ້ມູນຜົນກະທົບຂອງ ລບຕ ຕໍ່ເສດຖະກິດສັງຄົມ ແລະ ບົດລາຍງານອຸປະຕິເຫດ. ບົດບັນທຶກການເກັບກູ້ທີ່ໄດ້ປະຕິບັດໃນບໍລິເວນໃກ້ຄຽງອາດຈະຊ່ວຍໃຫ້ຮູ້ເຖິງຂອບເຂດ ແລະ ລະດັບການຕົກຄ້າງຂອງ ລບຕ ໃນພື້ນທີ່ໆກຳລັງສຳຫຼວດ.

ຂ. ຢ້ຽມຢາມສະຖານທີ່ ແລະ ໂອ້ລົມກັບເຈົ້າຂອງດິນ, ຜູ້ນຳໃຊ້ດິນ, ອຳນາດການປົກຄອງ ແລະ ຊຸມຊົນທ້ອງຖິ່ນ ກ່ຽວກັບການນຳໃຊ້ເນື້ອທີ່ດິນ, ປະເພດ ແລະ ຂອບເຂດຂອງການຕົກຄ້າງໃນພື້ນທີ່.

ຄ. ລົງເບິ່ງພື້ນທີ່ ແລະ ປະຕິບັດການກວດກາດ້ວຍຕາເປົ່າ ເພື່ອຊອກຫາຫຼັກຖານການຕົກຄ້າງຂອງ ລບຕ ຢູ່ໃນເນື້ອທີ່ດິນ. ສິ່ງທີ່ເປັນຫຼັກຖານບົ່ງບອກການຕົກຄ້າງຂອງ ລບຕ ບໍ່ຈຳເປັນຈະຕ້ອງແມ່ນ ລບຕ ທີ່ພົບເຫັນເທົ່ານັ້ນ ສະເກັດຂອງລະເບີດກໍສາມາດບົ່ງບອກເຖິງການຕົກຄ້າງຂອງ ລບຕ ໄດ້ເຊັ່ນກັນ.

ການສໍາຫຼວດທົ່ວໄປອາດຈະມີການນໍາໃຊ້ອຸປະກອນກວດໂລຫະເພື່ອກໍານົດຄວາມໜ້າແໜ້ນຂອງສະເກັດລະເບີດໃນພື້ນທີ່ (ໂດຍບໍ່ໃຫ້ຂຸດ).

ຈຸດປະສົງຫຼັກໃນການສໍາຫຼວດທົ່ວໄປກໍ່ຄືຂັ້ນຕອນການສໍາຫຼວດເພື່ອກວດກາເບິ່ງວ່າເນື້ອທີ່ດິນທີ່ຈະໃຫ້ເກັບກູ້ນັ້ນມີຫຼັກຖານກ່ຽວກັບຜົນກະທົບໃນການນໍາໃຊ້ເນື້ອທີ່ດິນຫຼືບໍ່,ແລະມີຄວາມຕ້ອງການໃຫ້ມີການສໍາຫຼວດໃນຕໍ່ໜ້າ. ຕົວຢ່າງ:

ກ. ຖ້າຫາກວ່າເນື້ອທີ່ດິນບໍ່ມີຫຼັກຖານວ່າມີລະເບີດຕົກຄ້າງຊຶ່ງຈະໄດ້ຮັບຜົນກະທົບຕໍ່ຜູ້ນໍາໃຊ້ດິນແລະຄວນອະນຸຍາດໃຫ້ນໍາໃຊ້ເນື້ອທີ່ດິນດັ່ງກ່າວໄດ້. ບໍ່ສົ່ງເສີມໃຫ້ມີການສໍາຫຼວດອີກ.

ຂ. ຖ້າມີຫຼັກຖານຈະແຈ້ງວ່າດິນດັ່ງກ່າວມີລະເບີດຕົກຄ້າງຕ້ອງໃຫ້ມີການເກັບກູ້ສົມບູນແບບແລະຂຶ້ນແຜນເພື່ອເກັບກູ້. ບໍ່ຕ້ອງການໃຫ້ມີການສໍາຫຼວດເມື່ອມີຫຼັກຖານບົ່ງບອກຊະນິດແລະຈໍານວນຂອງລູກລະເບີດບໍ່ທັນແຕກຕົກຄ້າງ. ການຢັ້ງຢືນເນື້ອທີ່ເພື່ອເກັບກູ້ສົມບູນແບບຕ້ອງມີເຂດປັກຫຼັກໝາຍແດນ.

ຄ. ຖ້າຫາກມີຫຼັກຖານວ່າມີລະເບີດບໍ່ທັນແຕກຕົກຄ້າງຍັງບໍ່ຈະແຈ້ງຕ້ອງສົ່ງເສີມໃຫ້ມີການສໍາຫຼວດຕື່ມ. ການເຮັດທັງສອງຢ່າງພ້ອມກັນຄືການສໍາຫຼວດດ້ານວິຊາການຫຼືການທໍາລາຍເຄື່ອນທີ່ແມ່ນຂຶ້ນກັບການພົບເຫັນຊະນິດວັດຖຸລະເບີດ.

ໝາຍເຫດ: ດັ່ງທີ່ໄດ້ສະແດງໃຫ້ເຫັນໃນຂໍ້8ຂ້າງເທິງນີ້ຂັ້ນຕອນການສໍາຫຼວດອາດຈະລວມທັງຂອບເຂດວຽກເກັບກູ້ແຕ່ບໍ່ໄດ້ກວມເອົາການເກັບກູ້ສົມບູນແບບ.

## 9.2. ການສໍາຫຼວດດ້ານວິຊາການ

ການສໍາຫຼວດດ້ານວິຊາການພົວພັນກັບການປະຕິບັດງານເກັບກູ້ລະເບີດໃນພື້ນທີ່ໆພິສູດ ເພື່ອເກັບກູ້ທີ່ມີຫຼັກຖານວ່າມີຈໍານວນລະເບີດບໍ່ທັນແຕກຕົກຄ້າງ ຢູ່ ຕາມທໍາມະຊາດທີ່ຍັງບໍ່ທັນຮູ້ແນ່ນອນເທື່ອ. ຈຸດປະສົງການສໍາຫຼວດດ້ານວິຊາການຄື:

ກ. ຢັ້ງຢືນວ່າໃຫ້ມີການເກັບກູ້ເພື່ອນໍາໃຊ້ເນື້ອທີ່ດິນ. ໃນກໍລະນີດັ່ງກ່າວນີ້ການສໍາຫຼວດດ້ານວິຊາການແມ່ນຕົວແທນພື້ນທີ່ຕົວຢ່າງ, ພ້ອມທັງຕົວຢ່າງໃນການນໍາໃຊ້ເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້. ໃນກໍລະນີບໍ່ມີຫຼັກ ຖານປະເພດລູກລະເບີດທີ່ບໍ່ທັນແຕກມີທ່າອ່ຽງວ່າຈະສົ່ງຜົນກະທົບຈາກການນໍາໃຊ້ດິນ.

ໝາຍເຫດ: ໂດຍທົ່ວໄປການສະເໜີເພື່ອຂໍອະຍາດຂອງຂໍ້ກໍານົດຢູ່ໃນວັກເທິງນັ້ນ. ຖ້າຫາກມີຫຼັກຖານວ່າມີລະເບີດບົມບີ້ແລະມີລະເບີດໜ້າອັນຕະລາຍຈໍານວນຫຼາຍທີ່ຄ້າຍຄືລູກບົມບີ້ຢູ່ໃນພື້ນທີ່.ຖ້າມີຫຼັກຖານໄດ້ພົບເຫັນລະເບີດຢູ່ໃນພື້ນທີ່ໆໄດ້ນໍາໃຊ້ແລ້ວ ແລະມີລະເບີດໜ້າອັນຕະລາຍຈໍານວນໜຶ່ງທີ່ຄ້າຍຄືລູກບົມບີ້. ໃນສອງກໍລະນີດັ່ງກ່າວນັ້ນຄວນສົ່ງເສີມໃຫ້ມີການສໍາຫຼວດເພື່ອຊອກຫາຫຼັກຖານມາຢັ້ງຢືນ.

ຂ. ເພື່ອເຮັດໃຫ້ການຈໍາກັດການເກັບກູ້ເນື້ອທີ່ດິນທີ່ອະນຸຍາດເກັບກູ້ສໍາເລັດໄດ້ນັ້ນແມ່ນຫຼີກລ້ຽງການໃຫ້ການເກັບກູ້ສົມບູນແບບ. ການເກັບກູ້ດັ່ງກ່າວນີ້ອາດເຮັດໄດ້ຖ້າຫາກມີຫຼັກຖານຈາກເນື້ອທີ່ດິນທີ່ຕ້ອງການເກັບກູ້ນັ້ນແຕ່ບໍ່ໝາຍວ່າສາມາດເຮັດໄດ້ທັງໝົດພື້ນທີ່. ສິ່ງນີ້ອາດພົວພັນເຖິງການເກັບກູ້ຂອງສັດສ່ວນເນື້ອທີ່ອັນກວ້າງໃຫຍ່ກວ່າຊຶ່ງສະແດງໃຫ້ເຫັນໃນວັກຂ້າງເທິງນັ້ນ.

ຄ. ໃຫ້ພິສູດເນື້ອທີ່ດິນທີ່ຕ້ອງການໃຫ້ມີການເກັບກູ້ສົມບູບແບບ. ໃນກໍລະນີນີ້ການສໍາຫຼວດດ້ານວິຊາການຕ້ອງການກວມເອົາເນື້ອທີ່ໃຫ້ພຽງພໍເພື່ອຢັ້ງຢືນເຖິງຄວາມແນ່ນອນໃຫ້ແກ່ການເກັບກູ້ສົມບູນນັ້ນ,ໃຫ້ຄິດສະເໜີວ່າທ່າທີຂອງຂັ້ນຕອນການສໍາຫຼວດແມ່ນເພື່ອເກັບກູ້ເນື້ອທີ່ໆສາມາດເຮັດໄດ້ເພື່ອບໍ່ຢາກໃຫ້ມີການເກັບກູ້ສົມບູນນັ້ນ.

ການທຳລາຍເຄື່ອນທີ່ຫຼືການເກັບກູ້ອື່ນໆອາດ ລວມທັງ ການສຳຫຼວດດ້ານວະຊາການແມ່ນຂຶ້ນຢູ່ກັບພົບເຫັນຫຼັກຖານວ່າມີລະເບີດບໍ່ທັນແຕກຕົກຄ້າງໃນພື້ນທີ່.

ທຸກການປະຕິບັດງານການເກັບກູ້ລະເບີດຕ້ອງໃຫ້ສອດຄ່ອງກັບທຸກໆຂໍ້ກຳນົດໃນການສຳຫຼວດດ້ານວິຊາການກ່ຽວກັບການປະຕິບັດງານເກັບກູ້ລະເບີດທີ່ໄດ້ກຳນົດລາຍລະອຽດໄວ້ໃນ **ມາດຕະຖານແຫ່ງຊາດບົດທີ** 7 ຍົກເວັ້ນແຕ່ **ການປະຕິບັດງານເກັບກູ້ລະເບີດ** ທີ່ກຳນົດໄວ້ໃນຂໍ້ 9.2.1 ຂ້າງລຸ່ມນີ້.

### 9.2.1. ການສຳຫຼວດດ້ານວິຊາການສະເພາະສຳລັບຫຼັກຖານຂອງ ລບຕ

ໃນບາງກໍລະນີ ຫຼັກຖານຂອງ ລບຕ ທີ່ພົບເຫັນໃນການສຳຫຼວດທົ່ວໄປ ຈະຊີ້ບອກເຖິງປະເພດຂອງ ລບຕ ແລະ ການສຳຫຼວດດ້ານວິຊາການແມ່ນຈະປະຕິບັດເພື່ອກຳນົດຂອບເຂດຂອງການຕົກຄ້າງເທົ່ານັ້ນ. ໃນສະພາບການເຫຼົ່ານັ້ນ ແມ່ນບໍ່ມີຄວາມພຽງພໍທີ່ຈະປະຕິບັດການສຳຫຼວດດ້ານວິຊາການໂດຍນຳໃຊ້ມາດຕະການເກັບກູ້ພື້ນທີ່ແບບຄົບຖ້ວນ, ຊຶ່ງການນຳໃຊ້ມາດຕະການທີ່ກະທັດຮັດຈະເປັນສິ່ງທີ່ເໝາະສົມກວ່າ.

ໃນສະພາບການທີ່ອີງການປະຕິບັດງານດ້ານເກັບກູ້ລະເບີດ ກຳລັງດຳເນີນການສຳຫຼວດດ້ານວິຊາການສະເພາະສຳລັບຫຼັກຖານຂອງ ລບຕ ຂໍ້ກຳນົດຕ່າງໆໃນມາດຕະການປະຕິບັດງານອາດຈະດັດແກ້ເນື້ອໃນຕາມເງື່ອນໄຂດັ່ງລຸ່ມນີ້:

ກ. ເພື່ອຮັກສາຄຸ້ມຄອງດ້ານຄວາມປອດໄພ.

ຂ. ການຝຶກຊ້ອມເກັບກູ້ ແລະ ລະບຽບການຕ່າງໆ ທີ່ລະບຸໄວ້ໃນມາດຕະຖານແຫ່ງຊາດ ບົດທີ 7 ວ່າດ້ວຍການປະຕິບັດງານເກັບກູ້ ລບຕ ຈະໄດ້ມີການປັບປຸງໃຫ້ເໝາະສົມກັບວິທີການສຳຫຼວດດ້ານວິຊາການທາງດ້ານລາຍລະອຽດ ລວມທັງ ໃນການສຳຫຼວດຂອງມາດຕະຖານການປະຕິບັດງານ(SOPs); ເບິ່ງຂໍ້ 10.4 ຢູ່ດ້ານລຸ່ມ.

ຄ. ບໍ່ໄດ້ນຳໃຊ້ຂໍ້ກຳນົດກ່ຽວກັບຄວາມເລິກ ແລະ ມາດຕະຖານການເກັບກູ້.

ງ. ຂໍ້ກຳນົດສຳລັບການກະກຽມສະໜາມອາດຈະຫຼຸດລົງໂດຍອີງໃສ່ຂໍ້ 2 ຂອງ ມາດຕະຖານແຫ່ງຊາດ ບົດທີ 5 ວ່າດ້ວຍ ການກະກຽມສະໜາມ, ແຕ່ການຄວບຄຸມສະໜາມເຮັດວຽກຢ່າງມີປະສິດທິພາບກໍ່ຍັງຕ້ອງຖືກປະຕິບັດຢ່າງເຂັ້ມງວດ.

ຈ. ຂໍ້ກຳນົດສຳລັບລະບົບປັກໝາຍການເກັບກູ້ ອາດຫຼຸດລົງ ໂດຍໃຫ້ກຳນົດພາບລວມທີ່ຈະແຈ້ງລະຫວ່າງພື້ນທີ່ ທີ່ຈະຖືກປະເມີນຜົນ ແລະ ອາດຈະບໍ່ຖືກປະເມີນຜົນ ລວມທັງ ການຮັກສາໄລຍະຫ່າງຄວາມປອດໄພ.

ສ. ການທົດສອບເຄື່ອງກວດແມ່ນທົດສອບກັບສິ່ງທົດສອບທີ່ມີຂະໜາດກ່ຽວກັບຫຼັກຖານຂອງລບຕ ທີ່ເປັນເປົ້າໝາຍຂອງການກວດຫາ.

ໃນຜົນສຳເລັດຈາກຂະບວນການສຳຫຼວດຂອງອີງການເກັບກູ້ ອາດຈະຕ້ອງໄດ້ຖືກປະຕິບັດເກັບກູ້ເຕັມຮູບແບບ ຫຼື ມີການມອບ-ໂອນອະນຸຍາດໃຫ້ນຳໃຊ້ດິນເລີຍ ຄືດັ່ງທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 10 ຂ້າງລຸ່ມນີ້.

## 10. ການເກັບກູ້ເນື້ອທີ່ແລະການຄຸ້ມຄອງດ້ານຄວາມສ່ຽງທີ່ຮ້າຍແຮງ

ໃນສະພາບໂດຍລວມ, ເນື້ອທີ່ດິນທີ່ມີການອະນຸຍາດໃຫ້ນຳໃຊ້ໄດ້ກໍ່ຕໍ່ເມື່ອບໍ່ພົບຂອງ ລບຕ ທີ່ມີຂະໜາດເທົ່າກັບ ຫຼື ໃຫຍ່ກວ່າ ບົມບີ 26 ເຕັມໜ່ວຍ ທີ່ພົບເຫັນຢູ່ໃນເນື້ອທີ່ດິນ, ສ່ວນສະເກັດທີ່ເກີດຈາກລູກລະເບີດໃຫຍ່ແຮງສູງທີ່ຖິ້ມຈາກຍົນ ຫຼື ລູກປືນຂະໜາດ ໃຫຍ່ທີ່ນຳໃຊ້ທາງພາກພື້ນດິນ ທີ່<u>ແນ່ໃຈວ່າ</u>ສະເກັດເຫຼົ່ານີ້ມາຈາກຂ້າງນອກຂອງເນື້ອທີ່ດິນທີ່ສຳຫຼວດ ໃນກໍລະນີກໍເປັນທີ່ຍອມຮັບເອົາໄດ້ (ເບິ່ງໝາຍເຫດລຸ່ມນີ້).

ໝາຍເຫດ: ໜ່ວຍງານສຳຫຼວດຄວນຈະໃຊ້ປະສົບການຂອງຕົນໃນການຕັດສິນສະເກັດຈາກລູກບົມ ຫຼື ລູກປືນຂະໜາດໃຫຍ່ທີ່ນຳໃຊ້ທາງພາກພື້ນດິນທີ່ພົບເຫັນ. ຊຶ່ງສະເກັດທີ່ພົບນັ້ນອາດຟົ້ງມາຈາກບ່ອນອື່ນ ເຮັດໃຫ້ເນື້ອທີ່ດິນທີ່ບໍ່ມີ ລບຕ ມີການຕົກຄ້າງ ຈາກສະເກັດ.

ເຖິງແມ່ນວ່າການຄຸ້ມຄອງຄວາມສ່ຽງອັນຕະລາຍໄດ້ອະນຸຍາດໃຫ້ບັນດາອົງການເກັບກູ້ລະເບີດອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນຢ່າງຈະແຈ້ງພາຍຫຼັງມີການຍອມຮັບຂັ້ນຕອນການສຳຫຼວດຄົບຖ້ວນ,ເຊິ່ງສາມາດປະເມີນຄວາມສ່ຽງຈາກ ລບຕ ທີ່ມີທ່າອ່ຽງອາດເກີດຂຶ້ນກັບການນຳໃຊ້ດິນນັ້ນ.

ຂໍ້ອະນຸຍາດດັ່ງກ່າວນີ້ຕ້ອງໄດ້ປະຕິບັດຢ່າງເຂັ້ມງວດແລະບໍ່ຄວນຖືເບົາເງື່ອນໄຂການປະຕິບັດຕ້ອງສອດຄ່ອງກັບລາຍລະອຽດດັ່ງລຸ່ມນີ້.

### 10.1. ເງື່ອນໄຂໃນການນຳໃຊ້ການຄຸ້ມຄອງຄວາມສ່ຽງອັນຕະລາຍສຳລັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ນັ້ນ

ລະເບີດທຸກຊະນິດທີ່ພົບຢູ່ໃນເນື້ອທີ່ໆເກັບກູ້ ຕ້ອງທຳລາຍຖິ້ມ,ເຄື່ອນຍ້າຍອອກຫຼືໃຫ້ປັກໝາຍໄວ້ທີ່ລະບຸໄວ້ໃນບົດ **ທີ 4 ຂອງມາດຕະຖານແຫ່ງຊາດວ່າດ້ວຍລະບົບການປັກຫຼັກໝາຍ.** ການກຳນົດແຜນທີ່ແລະຂື້ນແຜນເພື່ອທຳລາຍນັ້ນຕ້ອງລວມມີເອກະສານໃນການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນຕອນດັ່ງກ່າວ.

ເຈົ້າຂອງທີ່ດິນຫຼືຜູ້ນຳໃຊ້ດິນມີສ່ວນກ່ຽວຂ້ອງໃນການປະຕິບັດຄວາມເປັນໃປຂອງຂັ້ນຕອນການສຳຫຼວດ,ເຂົ້າໃຈແລະຍອມຮັບດ້ານຄວາມສ່ຽງໃນການນຳໃຊ້ເນື້ອທີ່ດິນທີ່ໄດ້ນຳສະເໜີໂດຍອົງການເກັບກູ້ລະເບີດນັ້ນ. ໃນບົດຄວາມຂອງເອກະສານທີ່ມີຜົນຕໍ່ການອະນຸຍາດໃຫ້ນຳໃຊ້ດິນໂດຍແມ່ນເຈົ້າຂອງດິນຫຼືຜູ້ນຳໃຊ້ດິນເປັນຜູ້ລົງລາຍເຊັນຮັບຮູ້.

ໝາຍເຫດ: ອົງການເກັບກູ້ ຍັງຕ້ອງດຳເນີນຜ່ານຂັ້ນຕອນການມອບຮັບເນື້ອທີ່ດິນເປັນທາງການຊຶ່ງໄດ້ລະບຸໄວ້ໃນບົດທີ **11 ຂອງມາດຕະ**ຖານແຫ່ງຊາດວ່າດ້ວຍລະບຽບການມອບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້.

ການປະຕິບັດຂັ້ນຕອນການສຳຫຼວດແລະຊີ້ແຈງເຫດຜົນໃນການຕັດສິນໃຈທີ່ອະນຸຍາດໃຫ້ນຳຊັ້ເນື້ອທີ່ດິນນັ້ນຕ້ອງມີການບັນທຶກໄວ້ໃນເອກະສານຢ່າງຈະແຈ້ງ. ຂໍ້ກຳນົດໃນການບັນທຶກຂັ້ນຕອນການສຳຫຼວດວ່າດ້ວຍຜົນງານຕ້ອງອີງໃສ່ລະບຽບການອອກໜັງສືຢັ້ງຢືນ.

ຖ້າຫາກບໍ່ໄດ້ລວມໄວ້ໃນບົດລາຍງານທີ່ແຍກອອກຕ່າງຫານນັ້ນ, ເອກະສານປົດປ່ອຍເນື້ອທີ່ດິນຕ້ອງໄດ້ລວມໃວ້ໃນລາຍລະອຽດການກວດກາຫຼືໃວ້ໃນອຸປະກອນການກວດໂລຫະ,ແລະສິ່ງເສດເຫຼືອທີ່ພົບພໍ້. ຄຳເຫັນໃນການປະເມີນຄວາມສ່ຽງຕໍ່ຜູ້ຢູ່ອາໃສແມ່ນລວມມີດັ່ງນີ້:

ກ. ອາດຍັງມີ ລບຕ ຫຼົງເຫຼືອຢູ່ໃນພື້ນທີ່. ຕໍ່ກັບເລື່ອງນີ້ຄວນໄດ້ຮັບການຢືນຢັນຈາກຜົນຂອງການສຳຫຼວດ.

ຂ. ປະເພດຂອງ ລບຕ.

ຄ. ຄວາມສ່ຽງຕໍ່ເຈົ້າຂອງທີ່ດິນຫຼືຜູ້ນຳໃຊ້ດິນບົນພື້ນຖານຂອງປະເພດ ລບຕ ແລະ ທ່າອ່ຽງອາດເກີດຂື້ນໃນການນຳໃຊ້ເນື້ອທີ່ດິນນັ້ນ.

ງ. ຄວາມສ່ຽງຕໍ່ ເຈົ້າຂອງທີ່ດິນຫຼືຜູ້ນຳໃຊ້ດິນຖ້າຫາກວ່າມີສາເຫດອື່ນໆ ມີທ່າອ່ຽງອາດເກີດຂື້ນໃນການນຳໃຊ້ເນື້ອທີ່ດິນນັ້ນ.

ເອກະສານປົດປ່ອຍເນື້ອທີ່ດິນປະກອບມີບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້ ແລະ ສົ່ງໃຫ້ຫ້ອງການ ຄຊກລ ສູນກາງພາຍໃນໜຶ່ງເດືອນກ່ອນຈະມີການມອບຮັບເນື້ອທີ່ດິນ.

ບັນດາອົງການເກັບກູ້ລະເບີດທີ່ບໍ່ປະຕິບັດຕາມການຄຸ້ມຄອງຄວາມສ່ຽງໄພໃນເວລາສຳຫຼວດດ້ວຍເຫດຜົນອັນໃດກໍ່ຕາມແມ່ນໃຫ້ປະຕິບັດຕາມຫຼັກການການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນໃນວັກ 1 ຂໍ້ 10 ຂອງ ມາດຕະຖານແຫ່ງຊາດບົດນີ້. ການເຮັດບົດລາຍງານການສຳຫຼວດດ້ານວິຊາການຕ້ອງເຮັດພ້ອມກັນກັບ ບົດລາຍງານການສຳຫຼວດພາຍຫຼັງການເກັບກູ້.

## 10.2. ການທົບທວນຄືນຂອງ ຄຊກລ

ໂດຍປົກກະຕິບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້ແມ່ນ ຄຊກລ ເປັນຜູ້ກວດກາເອກະສານການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນ ລວມທັງ ການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນທີ່ໄດ້ຜ່ານການຄຸ້ມຄອງຄວາມສ່ຽງອັນຕະລາຍແລ້ວ. ຖ້າວ່າ ຄຊກລ ບໍ່ພໍໃຈກັບການປະຕິບັດດັ່ງກ່າວກໍ່ອາດຈະບໍ່ຍອມຮັບບົດລາຍງານການສຳຫຼວດຢ່າງຄົບຖ້ວນ ແລະ ຫຼືບໍ່ກໍ່ລາຍງານໃຫ້ອົງການປະຕິບັດວຽກດັ່ງກ່າວເຮັດຕື່ມໃນເນື້ອທີ່ທີ່ໄດ້ປະຕິບັດມາແລ້ວນັ້ນ.

## 10.3. ຄວາມຮັບຜິດຊອບຕໍ່ເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້

**ລະບຽບການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້**ໃນ ບົດທີ 11 ໄດ້ກວມເອົາຄວາມຮັບຜິດຊອບ ຂອງອົງ ການເກັບກູ້ລະ ເບີດຕໍ່ເຫດການເກີດຂື້ນ.ຂໍ້ກຳນົດຢູ່ໃນບົດທີ11ນີ້ຍັງໄດ້ອົງໃສ່ກໍລະນີເນື້ອທີ່ດິນທີ່ ເກັບກູ້ ທີໄດ້ຜ່ານການຄຸ້ມຄອງຄວາມສ່ຽງອັນຕະລາຍແລ້ວ.

ອົງການເກັບກູ້ລະເບີດຈະປະຕິບັດຕາມການຄຸ້ມຄອງຄວາມສ່ຽງອັນຕະລາຍໃນເວລາເຮັດການສຳຫຼວດເພື່ອຮັບປະກັນໃຫ້ມີການນຳໃຊ້ທຸກຄວາມພະຍາຍາມເຂົ້າໃນທຸກຂັ້ນຕອນການສຳຫຼວດ ແລະ ໄດ້ລະບຸແຈ້ງໄວ້ໃນເອກະສານຕໍ່ການຕັດສິນໃຈປະຕິບັດວຽກ.

## 10.4. ມາດຖານລະບຽບການປະຕິບັດງານ (SOP)

ອົງການເກັບກູ້ລະເບີດ ຈະຕ້ອງກຳນົດລະບຽບໃນການສຳຫຼວດຢູ່ໃນມາດຖານລະບຽບການປະຕິບັດງານແລະການເກັບກູ້ເນື້ອທີ່ຂອງຕົນ. ລະບຽບການປະຕິບັດງານເຫຼົ່ານີ້ ກໍ່ເພື່ອຮັບປະກັນການປະຕິບັດໜ້າວຽກສຳຫຼວດ ສາມາດປະຕິບັດຢ່າງປອດໄພ, ມີປະສິດທິພາບ ແລະ ສອດຄ່ອງກັບຂໍ້ກຳນົດຂອງມາດຕະຖານແຫ່ງຊາດ.

# 11. ການສຳຫຼວດບ່ອນທີ່ ລບຕ

ເມື່ອມີການສຳຫຼວດບ່ອນທີ່ມີ ລບຕ ທີມີຜົນກະທົບຕໍ່ການນຳໃຊ້ເນື້ອທີ່ດິນ ຫຼື ມີຄວາມສ່ຽງອັນຕະລາຍຕໍ່ຊຸມຊົນປົກກະຕິແລ້ວວຽກໃນລັກສະນະນີ້ຈະໄດ້ມອບໃຫ້ໜ່ວຍງານທຳລາຍເຄື່ອນທີ່ປະຕິບັດ, ແຕ່ວ່າການສຳຫຼວດໃນລັກສະນະ ນີ້ກໍມີເປັນບາງຄັ້ງຄາວເທົ່ານັ້ນ. ຖ້າບ່ອນທີ່ມີ ລບຕ ນັ້ນແມ່ນ ລູກບົມບີ, ຫາກເປັນຄືແນວນັ້ນ ອາດຈຳປັນຕ້ອງປະຕິບັດການເກັບກູ້ເນື້ອທີ່ດິນ. ແຕ່ຖ້າລະເບີດທີ່ຕົກຄ້າງມີພຽງສຳພາວຸດທີ່ນຳໃຊ້ທາງພາກພື້ນດິນຢ່າງດຽວ ຊຶ່ງມີຄວາມສ່ຽງອັນຕະລາຍຕໍ່ຜູ້ນຳໃຊ້ທີ່ດິນບໍ່ຮ້າຍແຮງປານໃດ ກໍອາດຈະໃຫ້ໜ່ວຍທຳລາຍເຄື່ອນທີ່ທຳລາຍລະເບີດທີ່ພົບເຫັນໃນ ພື້ນທີ່ກ່ຽວຂ້ອງເລີຍ. ໜ່ວຍງານສຳຫຼວດ ຈະ ຕ້ອງປະເມີນສະຖານະການ ແລະ ກຳນົດຂະນິດ ແລະ ຂະ ໜາດຂອງການຕົກຄ້າງຂອງ ລບຕ ກ່ອນທີ່ຈະກຳນົດປະເພດຂອງການເກັບກູ້ໃດໜຶ່ງຕໍ່ໜ້າວຽກນັ້ນ.

ຖ້າ ລບຕ ທີ່ຕົກຄ້າງມີພຽງລະເບີດໜ່ວຍດຽວ ຫຼື ມີຈຳນວນໜ້ອຍຢູ່ສະຖານທີ່ດຽວກັນ ດັ່ງນັ້ນ ໜ້າວຽກໃນລັກສະນະນີ້ແມ່ນເໝາະສົມທີ່ຈະໃຫ້ໜ່ວຍທຳລາຍເຄື່ອນທີ່ເປັນຜູ້ປະຕິບັດ. ແຕ່ສິ່ງສຳຄັນ ອົງການເກັບກູ້ລະເບີດຄວນປັກໝາຍ ແລະ ໃຫ້ການສຶກສາຄວາມສ່ຽງໄພຈາກ ລບຕ/ກັບລະເບີດຝັງດິນ ເພື່ອເປັນການຫຼຸດຜ່ອນຄວາມສ່ຽງ.

ອົງການເກັບກູ້ລະເບີດ ຄວນຄຳນຶງເຖິງທາງເລືອກທີ່ໃຫ້ໜ່ວຍງານສຳຫຼວດ ສາມາດທຳລາຍ ຫຼື ເກັບກູ້ລູກລະເບີດ "ທີ່ມີຄວາມປອດໄພສາມາດຍ້າຍໄດ້" ແຕ່ການປະຕິບັດຄືດັ່ງກ່າວຕ້ອງໃຫ້ສອດຄ່ອງກັບ ຂອງຂໍ້ກຳນົດ ແລະ ເງື່ອນໄຂຄຸນວຸດທິ ທີ່ລະບຸໃນມາດຕະຖານແຫ່ງຊາດບົດນີ້.

ການສຳຫຼວດສຳລັບການທຳລາຍເຄື່ອນທີ່ແລະບ່ອນໜ້າວຽກປະຕິບັດແມ່ນພົວພັນເຖິງການລວບລວມຂໍ້ມູນເພື່ອປະຕິບັດການກັບ ລບຕ ຊຶ່ງບໍ່ໄດ້ລະບຸລາຍລະອຽດບົດນີ້.

## 12. ການລາຍງານການສຳຫຼວດ

ບົດລາຍງານການສຳຫຼວດທີ່ສະໜັບສະໜູນໃຫ້ກັບການປົດປ່ອຍເນື້ອທີ່ດິນທີ່ໄດ້ກຳນົດໄວ້ໃນຂໍ້ 10.1 ຂ້າງເທິງແມ່ນຕ້ອງໄດ້ສົ່ງໃຫ້ແກ່ ຫ້ອງການ ຄຊກລ ສູນກາງ ແຕ່ຖ້າຫາກເອກະສານປົດປ່ອຍເນື້ອທີ່ດິນຫາກມີເນື້ອໃນລາຍລະອຽດກ່ຽວກັບການສຳຫຼວດຄົບຖ້ວນໝົດແລ້ວ ແມ່ນບໍ່ຈຳເປັນຕ້ອງສົ່ງບົດລາຍງານການສຳຫຼວດໃຫ້ກັບຫ້ອງການ ຄຊກລ.

ບົດລາຍງານການສຳຫຼວດທີ່ສະໜັບສະໜູນໃຫ້ກັບການເກັບກູ້ ໂດຍອົງການເກັບກູ້ ລບຕ ແມ່ນບໍ່ຈຳເປັນສົ່ງໃຫ້ຫ້ອງການ ຄຊກລ.

### 12.1. ເນື້ອທີ່ດິນທີ່ໄດ້ສຳຫຼວດແລ້ວ ແຕ່ບໍ່ໄດ້ເອົາເຂົ້າໃນແຜນວຽກ

ອາດມີບາງກໍລະນີທີ່ອົງການເກັບກູ້ລະເບີດໄດ້ສຳຫວດເນື້ອທີ່ດິນໃດໜຶ່ງ ແລະ ເຫັນວ່າຕ້ອງການໃຫ້ເກັບກູ້ ແຕ່ຍ້ອນເຫດຜົນບາງຢ່າງທີ່ເນື້ອທີ່ດິນດັ່ງກ່າວບໍ່ໄດ້ກຳນົດເຂົ້າໃນແຜນວຽກ. ຖ້າມີກໍລະນີຄືດັ່ງກ່າວເກີດຂຶ້ນເຊັ່ນ:

ກ. ຜົນຂອງການສຳຫຼວດ ຈະຕ້ອງໄດ້ລາຍງານໃຫ້ ຫ້ອງການ ຄຊກລ ປະຈຳແຂວງ ເພື່ອການບັນທຶກຂໍ້ມູນຊຶ່ງເປັນການຫຼີກເວັ້ນບໍ່ໃຫ້ມີການເກັບກູ້ໃນພື້ນທີ່ໆຊ້ຳຊ້ອນກັນ. ຂໍ້ມູນທີ່ຈະຕ້ອງລາຍງານບົດລາຍງານການສຳຫຼວດ ຂອງອົງການໄດ້ກຳນົດໄວ້ໃນບົບພື້ນຖານຄວາມຖືກຕ້ອງ.

ຄ. ເຈົ້າຂອງດິນ, ຜູ້ນຳໃຊ້ດິນ ໄດ້ແຈ້ງເຫດຜົນທີ່ເນື້ອທີ່ດິນບໍ່ໄດ້ຮັບການເກັບກູ້ ແລະ ບໍ່ປະໃຫ້ມີຄວາມສົງໄສເຂົ້າໃຈຜິດວ່າ ພື້ນທີ່ດິນດັ່ງກ່າວມີຄວາມປອດໄພສາມາດນຳໃຊ້ໄດ້.

## 13. ການທຳລາຍລະເບີດ

ລບຕ ທັງໝົດທີ່ພົບໃນເນື້ອທີ່ດິນທີ່ໄດ້ສຳຫຼວດ ຈະຕ້ອງຖືກທຳລາຍໂດຍອົງການປະຕິບັດງານດ້ານລະເບີດ ທີ່ເປັນຜູ້ເຮັດການສຳຫຼວດ ໂດຍໃຫ້ສອດຄ່ອງກັບ **ບົດທີ 8 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ການທຳລາຍລະເບີດ.**

ການທຳລາຍລະເບີດຄືດັ່ງກ່າວອາດຈະບໍ່ສາມາດທຳລາຍໃນແຕ່ລະວັນໄດ້, ການທຳລາຍອາດຈະປະຕິບັດໃນອະນາຄົດ ທັງນີ້ແມ່ນອີງຕາມໜ້າວຽກ ຫຼື ການວາງແຜນວຽກຂອງອົງການເກັບກູ້ທີ່ກ່ຽວຂ້ອງ. ຖ້າ ລບຕ ທີ່ພົບໃນລະຫວ່າງການສຳຫຼວດຫາກບໍ່ສາມາດທຳລາຍໄດ້ໃນເວລານັ້ນ ກໍອາດຈະໝາຍໄວ້ ໂດຍໃຫ້ປະຕິບັດຕາມຂໍ້ກຳນົດທີ່ລະບຸໃນ **ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ລະບົບການປັກໝາຍ.**

ໝາຍເຫດ: ກ່ອນຈະປັກໝາຍລູກລະເບີດໃດໜຶ່ງ ຄວນປະເມີນຄວາມເປັນໄປໄດ້ທີ່ລູກລະເບີດດັ່ງກ່າວຈະຖືກຈັບບາຍ ຫຼື ເຄື່ອນຍ້າຍ ຊຶ່ງເປັນສາເຫດໂດຍກົງຈາກການປັກໝາຍ. ຄຳແນະນຳໃນການປະເມີນຜົນໄດ້ກຳນົດໄວ້ໃນ **ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ລະບົບການປັກໝາຍ.**

ຄວາມຮັບຜິດຊອບໃນການທຳລາຍລະເບີດທີ່ພົບໃນເນື້ອທີ່ດິນທີ່ໄດ້ທຳການສຳຫຼວດ ບາງຄັ້ງອາດຈະມອບຄວາມຮັບຜິດຊອບໃນການທຳລາຍໃຫ້ອົງການປະຕິບັດງານດ້ານລະເບີດອື່ນທຳລາຍໃຫ້ ທັງນີ້ແມ່ນຂຶ້ນກັບຂໍ້ຕົກລົງຂອງອົງການກ່ຽວຂອງ. ສ່ວນລາຍລະອຽດຂອງການມອບໝາຍຕ້ອງບັນທຶກເປັນລາຍລັກອັກສອນໄວ້.

ລບຕ ທີ່ພົບເຫັນໃນພື້ນທີ່ດິນທີ່ໄດ້ທຳການສຳຫຼວດຕ້ອງຖືກທຳລາຍທັງໝົດ. ຫ້າມບໍ່ໃຫ້ປະໄວ້ຢ່າງເດັດຂາດ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ.

ລບຕ ອື່ນໆທີ່ພົບເຫັນໃນລະຫວ່າງການສຳຫຼວດ ຊຶ່ງ**<u>ບໍ່ນອນຢູ່</u>**ໃນເນື້ອທີ່ດິນທີ່ຈະທຳການສຳຫຼວດ, ຖ້າເປັນໄປໄດ້ອົງການປະຕິບັດງານດ້ານລະເບີດທີ່ເຮັດການສຳຫຼວດຄວນຈະປະຕິບັດກັບ ລບຕ ເຫຼົ່ານັ້ນ. ຂໍ້ກຳນົດໃນການປັກໝາຍ ແລະ ຈັດການກັບ ລບຕ ໃນວັນຕໍ່ມາກໍ່ໃຫ້ນຳໃຊ້ໃນກໍລະນີນີ້ນຳ. ຖ້າອົງການເກັບກູ້ລະເບີດຫາກບໍ່ສາມາດປະຕິບັດກັບລູກລະເບີດເຫຼົ່ານັ້ນ, ແມ່ນໃຫ້ໝາຍໄວ້ໂດຍໃຫ້ສອດຄ່ອງກັບ **ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ລະບົບການປັກໝາຍ".** ແລະ ຕ້ອງລາຍງານໃຫ້ ຫ້ອງການ ຄຊກລ ປະຈຳແຂວງ ໂດຍສອດຄ່ອງກັບ ຂໍ້ 3 ຂອງມາດຕະຖານແຫ່ງຊາດສະບັບນີ້.

## 14. ການສຳຫຼວດຜົນສຳເລັດການເກັບກູ້

ທຸກອົງການເກັບກູ້ລະເບີດທີ່ມີການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນ ດ້ວຍການສຳຫຼວດ ຫຼື ການເກັບກູ້ມີຄວາມຮັບຜິດຊອບໃນການປັກໝາຍເຂດແດນ, ສຳຫຼວດ, ບັນທຶກ ແລະ ລາຍງານລາຍລະອຽດຂໍ້ມູນຂອງເນື້ອ ທີ່ໆອົງການເກັບກູ້ຈະອະນຸຍາດໃຫ້ນຳໃຊ້ ກ່ອນຈະຈັດໃຫ້ມີການມອບຮັບເນື້ອທີ່ດິນດັ່ງກ່າວ. ການສຳຫຼວດ, ການບັນທຶກ ແລະ ການລາຍງານທັງໝົດທີ່ກ່າວມານັ້ນແມ່ນເປັນອົງປະກອບຂອງບົດລາຍງານຜົນສຳເລັດການເກັບກູ້.

ການປັກໝາຍເຂດແດນເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ໄດ້ກຳນົດໄວ້ໃນ **ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດວ້ຍ ລະບົບການປັກໝາຍ** ແລະ ການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ໄດ້ກຳນົດໄວໃນ **ບົດທີ 11 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ລະບຽບການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້.**

ການສຳຫຼວດຜົນສຳເລັດການເກັບກູ້ຈະຕ້ອງປະຕິບັດດັ່ງຕໍ່ໄປນີ້:

ກ. ກຳນົດ/ສ້າງຈຸດອ້າງອີງ (RP) ແລະ ຈຸດມາດຕະຖານ (BMs).

ໝາຍເຫດ: ເນື່ອງຈາກວ່າມີຄວາມປັນໄປໄດ້ທີ່ຫຼັກໝາຍເຂດແດນອາດມີການເຄື່ອນຍ້າຍ ຫຼື ສູນເສຍ ພາຍຫຼັງການມອບຮັບພື້ນທີ່ດິນ, ດັ່ງນັ້ນ ມີຄວາມສຳຄັນຢ່າງຍິ່ງ ທີ່ຈຸດອ້າງອີງ ແລະ ຈຸດມາດ ຕະຖານ ຕ້ອງ ເປັນ ສິ່ງທີ່ມີລັກສະນະຖາວອນ. ຄວາມຊັດເຈນ ແລະ ມາດຕະຖານສູງຂອງການສຳຫຼວດແມ່ນມີຄວາມສຳຄັນໃນການກຳນົດ/ຊອກຫາທີ່ຕັ້ງຂອງເຄື່ອງໝາຍເຂດແດນໃນອະນາຄົດ.

ຂ. ການສຳຫຼວດຈຸດອ້າງອີງ, ຈຸດມາດຕະຖານ, ຈຸດເລີ່ມຕົ້ນ ແລະ ຈຸດລ້ຽວ. ການສຳຫຼວດ ບັນດາຈຸດດັ່ງກ່າວຄວນປະຕິບັດດັ່ງຕໍ່ໄປນີ້:

(1) ຫຼັກໝາຍທັງໝົດຕ້ອງມີຕົວເລກຈຸດພິກັດລະບົບຊີ້ບອກທີ່ຕັ້ງຂອງໂລກ (GPS) ເຊັ່ນ: ຈຸດອ້າງອີງ, ຈຸດມາດຕະຖານ, ຈຸດເລີ່ມຕົ້ນ ແລະ ຈຸດລ້ຽວ.

(2) ໃຫ້ວັດແທກທິດທາງ ແລະ ໄລຍະຫ່າງຈາກຈຸດມາດຕະຖານ (BM) ຫາຈຸດລັ້ງວຢ່າງໜ້ອຍ ແມ່ນ 2 ຈຸດ ທີ່ຢູ່ຕາມເຂດແດນຂອງເນື້ອທີ່ດິນທີ່ ອະນຸຍາດໃຫ້ນຳໃຊ້. ຖ້າມີການນຳໃຊ້ 2 ຈຸດມາດຕະຖານການວັດແທກທິດທາງ ແລະ ໄລຍະຫ່າງ ຄວນຈະວັດແທກຈາກທັງສອງຈຸດມາດຕະຖານໄປຫາຈຸດລັ້ງວທີ່ໄດ້ເລືອກໄວ້ (ຢ່າງໜ້ອຍ 2 ຈຸດ) ຢູ່ຕາມເຂດແດນຂອງເນື້ອທີ່ດັ່ງກ່າວ.

(3) ວັດແທກທິດທາງ ແລະ ໄລຍະຫ່າງ ລະຫວ່າງຈຸດເລີ່ມຕົ້ນ ແລະ ຈຸດລັ້ງວ ຕາມເຂດແດນຂອງເນື້ອທີ່ດິນທີ່ຈະອະນຸຍາດໃຫ້ນຳໃຊ້.

(4) ການອ່ານຄ່າ GPS ຂອງຈຸດລັ້ງວໃນຂອບເຂດຂອງພື້ນທີ່ໆບໍ່ໄດ້ເກັບກູ້ພາຍໃນຂອບເຂດຂອງເນື້ອທີ່ໆຈະປົດປ່ອຍ ຫຼື ຖ້າພື້ນທີ່ໆກ່ຽວຂ້ອງບໍ່ມີຮູບແບບສັນຍາລັກໂພລີກ້ອນ, ການປະກອບກັນຂອງການອ່ານຄ່າ GPS, ມູມຕ່າງໆ ແລະ ໄລຍະຫ່າງ ຊຶ່ງອາດສາມາດເຮັດໃຫ້ຂອບເຂດພື້ນທີ່ຖືກບັນທຶກໄດ້ຢ່າງຖືກຕ້ອງ.

ຄ. ຂຽນຂໍ້ມູນປະກອບໃສ່ **ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້**. ບົດລາຍງານນີ້ແມ່ນ ລວມເອົາທຸກຂໍ້ມູນທີ່ໄດ້ບັນທຶກໄວ້ໃນລະຫວ່າງການສຳຫຼວດ ແລະ ແຜນວາດຂອງສະໜາມເກັບກູ້. ແຜນວາດນີ້ຈະສະແດງບອກທີ່ຕັ້ງຂອງເຄື່ອງໝາຍການສຳຫຼວດ ແລະ ການບັນທຶກໃດໆຂອງພື້ນທີ່ໆບໍ່ໄດ້ເກັບກູ້ລວມທັງ ທີ່ຕັ້ງຂອງແຕ່ລະ ລບຕ ໃນລະຫວ່າງໜ້າວຽກ. ໃນແຜນວາດຄວນລະບຸປະເພດ. ລາຍລະອຽດລະບົບການ ປັກ ໝາຍທີ່ນຳໃຊ້ໃນການສຳຫຼວດຈະຕ້ອງກຳນົດໄວ້ໃນ **ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້**.

ການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ ຕ້ອງປະຕິບັດໃນທັນທີທີ່ການເກັບກູ້ລະເບີດ ຫຼື ການສຳຫຼວດຢູ່ເນື້ອທີ່ດິນທີ່ບົ່ງບອກວ່າ ບໍ່ຈຳເປັນຕ້ອງເກັບກູ້ລະເບີດແບບຄົບຖ້ວນ ໄດ້ປະຕິບັດສຳເລັດ. **ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້** ຈະຕ້ອງປະກອບເຂົ້ານຳເອກະສານກ່ຽວກັບໜ້າວຽກອື່ນໆ ແລ້ວສົ່ງໃຫ້ ຫ້ອງການ ຄຊກລ ສູນກາງ ພາຍໃນໜຶ່ງເດືອນກ່ອນຈະມີການມອບຮັບເນື້ອທີ່ດິນ. ລາຍລະອຽດໃນການຈັດສົ່ງບົດລາຍງານຜົນສຳເລັດໜ້າວຽກ ກຳນົດໄວ້ໃນ **ບົດທີ 11 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ລະບຽບການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້.**

## 14.1. ໜ້າວຽກເກັບກູ້ທີ່ໃຊ້ເວລາປະຕິບັດດົນ

ເມື່ອອີງການເກັບກູ້ລະເບີດປະຕິບັດໜ້າວຽກເກັບກູ້ທີ່ໃຊ້ເວລາດົນ ຕົວຢ່າງເຊັ່ນ: ວຽກເກັບກູ້ທີ່ຄາດຄະເນວ່າຈະໃຊ້ເວລາປະຕິບັດ 03 ເດືອນ. ຢ່າງໜ້ອຍສຸດໃນທຸກໆ 02 ເດືອນຕ້ອງໄດ້ເຮັດການປັກໝາຍເຂດແດນ, ການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ ແລະ ລາຍງານຄວາມຄືບໜ້າຂອງການເກັບກູ້. ການເຮັດແບບນີ້ກໍ່ເພື່ອເຮັດໃຫ້ຂໍ້ມູນເນື້ອທີ່ໆໄດ້ເກັບກູ້ ຂອງ ຫ້ອງການ ຄຊກລ ສູນກາງ ຖືກຕ້ອງກັບສະພາບປັດຈຸບັນ.

ຖ້າເນື້ອທີ່ດິນສ່ວນທີ່ໄດ້ເກັບກູ້ສຳເລັດແລ້ວ ຫາກຕ້ອງການທີ່ຈະນຳໃຊ້ກ່ອນ ເນື້ອທີ່ດິນຕອນນັ້ນກໍຄວນມອບຮັບຢ່າງເປັນທາງການໃນເວລາດຽວກັນກັບການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ.

## 14.2. ການເກັບກູ້ເພື່ອຈຸດປະສົງຂຸດຄົ້ນບໍ່ແຮ່

ໃນການເກັບກູ້ເນື້ອທີ່ດິນ ເພື່ອຈຸດປະສົງໃນການຂຸດຄົ້ນບໍ່ແຮ່ ຊຶ່ງຕ້ອງໄດ້ເກັບກູ້ຫຼາຍລົບຫຼາຍຕ່າວໃນເນື້ອທີ່ດິນຕອນດັ່ງກ່າວ ໂດຍເກັບກູ້ເປັນຊັ້ນໆກ່ອນຈະມີການຂຸດຄົ້ນແຮ່ທາດ. ການສຳຫຼວດຜົນສຳເລັດຂັ້ນສຸດທ້າຍໃນກໍລະນີນີ້ ແມ່ນບໍ່ຈຳເປັນຕ້ອງປະຕິບັດເທື່ອ ຈົນກ່ວາການປະຕິບັດວຽກງານເກັບກູ້ລະເບີດຈະປະຕິບັດສຳເລັດ.